United Nations Convention to Combat Desertification | United for land

WOCAT



©William Critchley

WOCAT: ສະພາບລວມຂອງໂລກ ກ່ຽວກັບແນວທາງການອະນຸລັກ ແລະ ເທັກໂນໂລຢີ

# ແບບສອບຖາມ ກ່ຽວກັບການຕອບສະໜອງດ້ານບົດບາດຍິງ-ຊາຍ ຕໍ່ການນໍາໃຊ້ເທັກໂນໂລຢີການຄຸ້ມຄອງທີ່ດິນແບບຍືນຍົງ (SLM)

ສະບັບປີ 2024

**ຜູ້ຂຽນ:**
Rima Mekdaschi Studer, Nicole Harari, Laura Ebneter & Camilla Steinböck, ສະພາບລວມຂອງໂລກ ກ່ຽວກັບແນວທາງການອະນຸລັກ ແລະ ເທັກໂນໂລຢີ (WOCAT) & ສູນການພັດທະນາ ແລະ ສິ່ງແວດລ້ອມ (CDE), ມະຫາວິທະຍາໄລ Bern; Suman Bisht & Sanjeev Bhuchar, ສູນນານາຊາດ ເພື່ອການພັດທະນາເຂດພູດອຍແບບປະສົມປະສານ (ICIMOD); Rockaya Aidara, Jeroen van Dalen, Lilia Maximova ແລະ Enni Kallio, ສົນທິສັນຍາສະຫະປະຊາຊາດ ວ່າດ້ວຍການຕ້ານການກາຍເປັນທະເລຊາຍ (UNCCD).

**ທົບທວນໂດຍຜູ້ຊ່ຽວຊານດ້ານບົດບາດຍິງ-ຊາຍ ແລະ SLM:**
Karen Bernard, ສົນທິສັນຍາສະຫະປະຊາຊາດ ວ່າດ້ວຍການຕ້ານການກາຍເປັນທະເລຊາຍ (UNCCD); Aurelie Bres & Ilaria Sisto, ອົງການອາຫານ ແລະ ການກະເສດຂອງສະຫະປະຊາຊາດ (FAO); Heleen Claringbould, ບໍລິສັດທີ່ປຶກສາ CorePage; Nicoline de Haan, ກຸ່ມທີ່ປຶກສາຮູບແບບການຄົ້ນຄວ້າດ້ານບົດບາດຍິງ-ຊາຍ ທີ່ຕິດພັນກັບວຽກງານກະສິກຳລະຫວ່າງປະເທດ (CGIAR); Cecilia Gasic & Ermias Betemariam, ສົນທິສັນຍາສະຫະປະຊາຊາດ ວ່າດ້ວຍການຕ້ານການກາຍເປັນທະເລຊາຍ (UNCCD); Lucia Gerbaldo, ອົງການອາຫານ ແລະ ການກະເສດຂອງສະຫະປະຊາຊາດ (FAO); Agustin Gomez, ມະຫາວິທະຍາໄລ Costa Rica; Lieselotte Heinz, ອົງການ GIZ (Deutsche Gesellschaft für Internationale Zusammenarbeit); Petra Jarvinen, ກອງທຶນສາກົນເພື່ອການພັດທະນາກະສິກຳ (IFAD); Ivy Kinyua, ກຸ່ມພັນທະມິດສາກົນ ດ້ານຊີວະນາໆພັນ ແລະ ສູນກະສິກຳເຂດຮ້ອນສາກົນ (CIAT); Nahid Naghizadeh, ສູນການພັດທະນາ ແລະ ສິ່ງແວດລ້ອມ ແບບຍືນຍົງ (CENESTA); Everlyne Nairesiae, UN Habitat - ໂຄງການ ການຕັ້ງຖິ່ນຖານຂອງມະນຸດແຫ່ງສະຫະປະຊາຊາດ; Dina Najjar, ສູນການຄົ້ນຄວ້າກະສິກຳໃນເຂດແຫ້ງແລ້ງ ນານາຊາດ (ICARDA); Lorenzo Rovelli & Khadidiatou Gueye, ສະຫະພັນແມ່ຍິງ ແຫ່ງສະຫະປະຊາຊາດ (UN Women); Jackelline Siles, ອົງການນານາຊາດ ດ້ານການອະນຸລັກທຳມະຊາດ (IUCN); Veronika Sitkova & Renata Duffková, ສະຖາບັນຄົ້ນຄ້ວາເພື່ອການອະນຸລັກດິນ ແລະ ນ້ຳ; Kristina Toderich, ມະຫາວິທະຍາໄລ Tottori ຂອງປະເທດຍີ່ປຸ່ນ; Nathalie van Haren, Both ENDS; Pamela White, ກຸ່ມບໍລິສັດທີ່ປຶກສາຂອງປະເທດຟິນແລນ ຈຳກັດ (Finnish Consulting Group Ltd).

**ໄດ້ທົດລອງ ແລະ ທົດສອບໃນ ຈຳນວນ 15 ປະເທດ:**
ທ່ານ ບຸນຖະໜອມ ບົວຫອມ, ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ; Tanmoy Das, Terre des hommes; Marième Diallo, Center de Suivi Ecologique; Daler Domullodzanov, ອົງການອາຫານ ແລະ ການກະເສດຂອງສະຫະປະຊາຊາດ (FAO) Tajikistan; Arafat Fazlay, ກົມປ່າໄມ້ ປະເທດບັງກະລາເທດ; Mira Haddad, ສູນການຄົ້ນຄວ້າກະສິກຳໃນເຂດແຫ້ງແລ້ງ ນານາຊາດ (ICARDA); Djolly Ma. P. Dinamling, Philippine Conservation Approaches and Technologies PhilCAT & Bureau of Soils and Water Management BSWM; Alicia Morugán Coronado, ມະຫາວິທະຍາໄລ Cartagena; Kabita Nhemhafuki, ສູນສາກົນເພື່ອການພັດທະນາເຂດພູດອຍແບບປະສົມປະສານ (ICIMOD); Oihane Olaetxea Martinez, ອົງການກາແດງ ແຫ່ງປະເທດສະວິດ (Swiss Red Cross); Beatriz Ramírez, Asociación de Becarios de Casanare; Bandara Rotawewa, ອົງການທີ່ປຶກສາດ້ານອາຫານ ແລະ ການກະເສດຂອງສະຫະປະຊາຊາດ (FAO) ແຫ່ງປະເທດສີລັງກາ; Abdoulaye Soumaila, Groupe de Recherche d'Etudes et d'Action pour le Développement (GREAD); Sophea Tim, ມະຫາວິທະຍາໄລກະເສດສາດ; Joy Tukahirwa, Rick Kamugisha ແລະ Mathias Wakulira, ອົງການເຄືອຂ່າຍການຄຸ້ມຄອງທີ່ດິນ ແຫ່ງປະເທດອູການດາ.

**ຂໍ້ມູນການຕິດຕໍ່:** wocat.cde@unibe.ch

**ການອ້າງອີງທີ່ແນະນຳ:**
WOCAT and UNCCD (2024). Questionnaire on Gender-responsive Sustainable Land Management (SLM) Technologies. WOCAT & CDE, University of Bern

ລິຂະສິດ 2024 ໂດຍ WOCAT

ວຽກນີ້ແມ່ນພາຍໃຕ້ການອານຸມັດ ພາຍໃຕ້ ສັນຍາສາກົນ ໃນການສ້າງແຫຼ່ງຂໍ້ມູນຮ່ວມກັນ ໂດຍບໍ່ມີຈຸດປະສົງດ້ານການຄ້າ (CC BY-NC-SA 4.0): https://creativecommons.org/licenses/by/4.0/. WOCAT ແລະ CDE ຍິນດີຕ້ອນຮັບການໄດ້ຮັບແຈ້ງການກ່ຽວກັບການໃດໜຶ່ງການພິມເຜີຍແຜ່ໃໝ່ຂອງວຽກງານນີ້.

# ສາລະບານເນື້ອໃນ


**ພາກທີ 1: ຄຳແນະນຳ ກ່ຽວກັບການນຳໃຊ້ແບບສອບຖາມ**

1 ຍິນດີຕ້ອນຮັບສູ່ WOCAT ..... 5
2 ຈຸດປະສົງຂອງ ແບບສອບຖາມ ..... 5
3 ແມ່ນໃຜ ເປັນຜູ້ເກັບກຳຂໍ້ມູນ ..... 7
4 ວິທີການ ນຳໃຊ້ແບບສອບຖາມ ..... 8
4.1 ໂຄງສ້າງ ..... 8
4.2 ແຫຼ່ງທີ່ມາຂອງຂໍ້ມູນ ແລະ ຂໍ້ມູນ ..... 9
4.3 ການສົນທະນາເປັນກຸ່ມ ..... 10
4.4 ໄລຍະເວລາ ແລະ ການຈັບເວລາ ..... 12
5 ປະເດັນດ້ານຈັນຍາທຳ ..... 13
6 ຄຸນນະພາບຂອງຂໍ້ມູນ ແລະ ການເຜີຍແຜ່ຜົນໄດ້ຮັບ ..... 13

ພາກທີ 2: ແບບສອບຖາມ ກ່ຽວກັບບົດບາດຍິງ-ຊາຍ ຕໍ່ວຽກງານການຄຸ້ມຄອງທີ່ດິນແບບຍືນຍົງ (SLM) ..... 14

1 ຂໍ້ມູນທົ່ວໄປ ..... 14
1.1 ຊື່ຂອງຊຸມຊົນ (ສະຫະກອນ, ກຸ່ມຜູ້ຊົມໃຊ້, ກຸ່ມຊົນເຜົ່າ) ທີ່ໄດ້ນຳໃຊ້ ຫຼື ກຳລັງນຳໃຊ້ເຕັກໂນໂລຢີ/ວິທີການ ..... 14
1.2 ຂໍ້ມູນການຕິດຕໍ່ ຂອງຜູ້ເກັບກຳຂໍ້ມູນ ທີ່ມີສ່ວນກ່ຽວຂ້ອງໃນການປະເມີນ ໃນແບບສອບຖາມ QG ..... 14
1.3 ຂໍ້ມູນ, ການນຳໃຊ້ ແລະ ແຫຼ່ງຂໍ້ມູນ ..... 15
1.4 ເງື່ອນໄຂ ກ່ຽວກັບການນຳໃຊ້ຂໍ້ມູນ ທີ່ບັນທຶກໄວ້ໃນຖານຂໍ້ມູນ WOCAT ..... 15
2 ຄຳອະທິບາຍຫຍໍ້ ກ່ຽວກັບ ເທັກໂນໂລຢີ SLM ແລະ ວິທີການທີ່ກ່ຽວຂ້ອງ (ຖ້າມີ) ..... 17
2.1 ເທັກໂນໂລຢີ ການຄຸ້ມຄອງທີ່ດິນແບບຍືນຍົງ (SLM Technology) ..... 17
2.2 ວິທີການກ່ຽວກັບ ການຄຸ້ມຄອງທີ່ດິນແບບຍືນຍົງ (SLM Approach) ..... 21
2.3 ຮູບພາບຂອງ ເທັກໂນໂລຢີ ແລະ ການສົນທະນາກຸ່ມ ..... 22
3 ການສົນທະນາກຸ່ມ ..... 22
3.1 ຜູ້ເຂົ້າຮ່ວມ ໃນການສົນທະນາກຸ່ມ ..... 22
3.2 ວັນທີ ແລະ ເວລາ ຂອງການດຳເນີນການສົນທະນາກຸ່ມ: ..... 23
3.3 ຂໍ້ມູນກ່ຽວກັບຄວາມເປັນມາຂອງ ຜູ້ເຂົ້າຮ່ວມ/ ອົງປະກອບຂອງກຸ່ມ (ຕ່ຳສຸດ 6 ຄົນ ແລະ ສູງສຸດ 12 ຄົນ): ..... 23
3.4 ເປັນຫຍັງເຂົາເຈົ້າຈຶ່ງເຂົ້າຮ່ວມໃນການສົນທະນາກຸ່ມ, ແມ່ນຫຍັງທີ່ເປັນສິ່ງດຶງດູດໃຈໃນການເຂົ້າຮ່ວມ? ..... 24
3.5 ຮູບພາບເພີ່ມເຕີມ ຂອງການສົນທະນາກຸ່ມ ແລະ ການນຳໃຊ້ເທັກໂນໂລຢີ ..... 24
3.6 ຜູ້ອຳນວຍຄວາມສະດວກ/ຜູ້ດຳເນີນການສົນທະນາ ..... 24
4 ສະພາບການຂອງຊຸມຊົນ ບ່ອນທີ່ມີການນຳໃຊ້ເທັກໂນໂລຢີ ..... 25
4.1 ໃຫ້ບອກບັນຫາ ທີ່ສຳຄັນສຳລັບທ່ານ ແລະ ກຸ່ມສົນທະນາ ມາສອງບັນຫາ, ທີ່ທ່ານຄິດວ່າ ຖ້າຫາກແກ້ບັນຫາເຫຼົ່ານີ້ແລ້ວຈະສາມາດເຮັດໃຫ້ເກີດມີຄວາມສະເໝີພາບດ້ານບົດບາດຍິງ-ຊາຍ ຢູ່ໃນຊຸມຊົນຂອງທ່ານ. ..... 25
4.2 ຄຸນລັກສະນະພິເສດຂອງຊຸມຊົນ ບ່ອນທີ່ມີການນຳໃຊ້ເທັກໂນໂລຢີ ແລະ ວິທີການທີ່ກ່ຽວຂ້ອງ (ຖ້າມີ). ..... 26
4.2.1 ຄຸນລັກສະນະດ້ານເສດຖະກິດສັງຄົມ ຂອງຊຸມຊົນ ..... 26
4.2.2 ການແບ່ງງານ ແລະ ແບ່ງໜ້າວຽກຢູ່ໃນຊົມຊົນ ..... 27
4.2.3 ການຍົກຍ້າຍຖິ່ນຖານ ຢູ່ໃນຊຸມຊົນ ..... 28
4.2.4 ຂໍ້ມູນກ່ຽວກັບ ດິນ ແລະ ນ້ຳ ..... 28
4.2.5 ລັກສະນະຕົ້ນຕໍຂອງຊຸມຊົນ ໂດຍອີງຕາມຂໍ້ມູນແຍກຕາມເພດຍິງ-ຊາຍ ..... 30
4.3 ການຕັດສິນໃຈ ໃນລະດັບຄົວເຮືອນ ຢູ່ໃນຊຸມຊົນທີ່ນຳໃຊ້ເທັກໂນໂລຢີ ..... 33
4.4 ບົດບາດຍິງ-ຊາຍ ໃນວຽກງານການຄຸ້ມຄອງທີ່ດິນ ໃນຊຸມຊົນທີ່ນຳໃຊ້ເທັກໂນໂລຢີ ແລະ ວິທີການທີ່ກ່ຽວຂ້ອງ (ຖ້າມີ) ..... 33
4.5 ການເຂົ້າເຖິງ ສິ່ງອຳນວຍຄວາມສະດວກຕ່າງໆ ຢູ່ໃນຊຸມຊົນ ..... 35
4.6 ການຄອບຄອງທີ່ດິນ ຢູ່ໃນຊຸມຊົນ ທີ່ນຳໃຊ້ເທັກໂນໂລຢີ ..... 38
4.6.1 ຄຳອະທິບາຍສະຖານະການຂອງກຳມະສິດທີ່ດິນ ແລະ ສິດນຳໃຊ້ທີ່ດິນ/ ສິດນຳໃຊ້ນ◌ໍ◌້າ ຢູ່ໃນຊຸມຊົນ. ..... 38
4.6.2 ຂໍ້ມູນການຄອບຄອງທີ່ດິນ ໂດຍແຍກຕາມເພດ ..... 38
4.6.3 ແມ່ຍິງ ແລະ ຜູ້ຊາຍໄດ້ຮັບມໍລະດົກທີ່ດິນເທົ່າທຽມກັນ ຫຼື ບໍ່? ..... 39

4.6.4 ສິດການນໍາໃຊ້ທີ່ດິນ ແມ່ນອີງຕາມກົດໝາຍ ຫຼື ອີງຕາມການປະຕິບັດທາງປະເພນີ: ..... 39
4.6.5 ສິດການນໍາໃຊ້ທີ່ດິນ ແມ່ນອີງຕາມກົດໝາຍບໍ່? (ສິດທີ່ເປັນທາງການ, ມີບ່ອນອີງເປັນລາຍລັກອັກສອນ ຫຼື ທີ່ຖືກຕ້ອງຕາມກົດໝາຍ): 40
4.6.6 ສິດການນໍາໃຊ້ທີ່ດິນ ແມ່ນອີງຕາມປະເພນີບໍ່? (ສິດທີ່ບໍ່ເປັນທາງການ, ສິດຕາມປະເພນີຊົນເຜົ່າ ຫຼື ສິດແບບດັ້ງເດີມ): ..... 40
4.6.7 ສິດການຊົມໃຊ້ນໍ້າ ສໍາລັບການປູກຝັງ ແລະ ລ້ຽງສັດ ແມ່ນອີງຕາມກົດໝາຍ ຫຼື ອີງຕາມການປະຕິບັດທາງປະເພນີ: ..... 40
4.6.8 ສິດການຊົມໃຊ້ນໍ້າ ສໍາລັບການປູກຝັງ ແລະ ລ້ຽງສັດ ແມ່ນອີງຕາມກົດໝາຍບໍ່? (ສິດທີ່ເປັນທາງການ, ມີບ່ອນອີງເປັນລາຍລັກອັກສອນ ຫຼື ສິດທີ່ເປັນທາງການ): ..... 40
4.6.9 ສິດການຊົມໃຊ້ທີ່ນໍ້າ ສໍາລັບການປູກຝັງ ແລະ ລ້ຽງສັດ ແມ່ນອີງຕາມປະເພນີບໍ່? (ບໍ່ມີບ່ອນອີງເປັນລາຍລັກອັກສອນ, ສິດບໍ່ເປັນທາງການ, ສິດຕາມປະເພນີຊົນເຜົ່າ ຫຼື ສິດແບບດັ້ງເດີມ): ..... 40
4.6.10 ສິດຕາມປະເພນີຂອງທ້ອງຖິ່ນ ມີຜົນບັງຄັບໃຊ້ເໜືອກົດໝາຍແຫ່ງຊາດ ໃນການໃຫ້ສິດການເຂົ້າເຖິງ ແລະ ການນໍາໃຊ້ທີ່ດິນຂອງແມ່ຍິງ ຫຼື ບໍ່? ..... 41
5 ກິດຈະກໍາ ແລະ ຜົນກະທົບຂອງເທັກໂນໂລຢີ ການຄຸ້ມຄອງທີ່ດິນແບບຍືນຍົງ (SLM) ແລະ ວິທີການທີ່ກ່ຽວຂ້ອງ (ຖ້າມີ) ..... 41
5.1 ຄວາມເໝາະສົມສໍາລັບແມ່ຍິງ ກ່ຽວກັບການນໍາໃຊ້ເທັກໂນໂລຢີ ແລະ ວິທີການທີ່ກ່ຽວຂ້ອງ (ຖ້າມີ) ..... 41
5.2 ກິດຈະກໍາຫຼັກ ໃນການຈັດຕັ້ງປະຕິບັດ ແລະ ບໍາລຸງຮັກສາ ໃນການຈັດຕັ້ງປະຕິບັດເທັກໂນໂລຢີ ..... 42
5.2.1 ກິດຈະກໍາໃນການຈັດຕັ້ງປະຕິບັດ (ສາມາດເບິ່ງໄດ້ຢູ່ໃນ QT ໃນຂໍ້ 4.3)* ..... 42
5.2.2 ກິດຈະກໍາການບໍາລຸງຮັກສາ (ສາມາດເບິ່ງໄດ້ຢູ່ໃນ QT ໃນຂໍ້ 4.5)* ..... 43
5.3 ການເຂົ້າເຖິງ ແລະ ການຕັດສິນໃຈ ກ່ຽວກັບຄວາມຕ້ອງການປັດໄຈການຜະລິດ ໃນການຈັດຕັ້ງປະຕິບັດ ແລະ ການບໍາລຸງຮັກສາ ການຈັດຕັ້ງປະຕິບັດເທັກໂນໂລຢີ SLM ..... 44
5.3.1 ປັດໄຈການຜະລິດ ສໍາລັບການສ້າງຕັ້ງ ..... 45
5.3.2 ປັດໄຈການຜະລິດ ສໍາລັບການບໍາລຸງຮັກສາ ..... 45
5.4 ການເຂົ້າຮ່ວມ ແລະ ການມີສ່ວນຮ່ວມ ຂອງຜູ້ຊົມໃຊ້ທີ່ດິນ ແລະ ຊຸມຊົນ ..... 46
5.5 ຜົນກະທົບທີ່ກ່ຽວຂ້ອງ ກັບບົດບາດຍິງ-ຊາຍ ຕໍ່ການນໍາໃຊ້ເທັກໂນໂລຢີ SLM ແລະ ວິທີການທີ່ກ່ຽວຂ້ອງ (ຖ້າມີ) ..... 48
5.6 ເງື່ອນໄຂການສະໜັບສະໜູນ ຫຼື ສິ່ງກີດຂວາງ ໃນການຈັດຕັ້ງປະຕິບັດ ແລະ ການຮັບຮອງເອົາເທັກໂນໂລຢີ ແລະ ວິທີການທີ່ກ່ຽວຂ້ອງ (ຖ້າມີ) ..... 50
6 ຄໍາແນະນໍາ, ຂໍ້ຄິດເຫັນວິທີປັບປຸງແກ້ໄຂ ໃນການເພີ່ມການມີສ່ວນຮ່ວມທາງ ດ້ານບົດບາດຍິງ-ຊາຍ ໃນການນໍາໃຊ້ເທັກໂນໂລຊີ SLM ແລະ ວິທີການທີ່ກ່ຽວຂ້ອງ (ຖ້າມີ) ..... 52
6.1 ມີວິທີການແນວໃດ ທີ່ຈະເຮັດໃຫ້ ເພີ່ມການຍອມຮັບ ແລະ ມີສ່ວນຮ່ວມ ຂອງແມ່ຍິງ ແລະ ຜູ້ຊາຍ ມີການປັບຕົວ ໃນການຍອມຮັບເທັກໂນໂລຢີຄືແນວໃດ ..... 52
6.1.1 ສາເຫດ ແລະ ເຫດຜົນພື້ນຖານ ຂອງຄວາມແຕກຕ່າງ ດ້ານການຈໍາແນກເພດ ໃນການຍອມຮັບຈັດຕັ້ງປະຕິບັດເທັກໂນໂລຢີ ແລະ ວິທີການທີ່ກ່ຽວຂ້ອງ (ຖ້າມີ)? ..... 52
6.1.2 ຄວາມແຕກຕ່າງ ໃນການຈໍາແນກເພດເຫຼົ່ານີ້ ຈະຖືກຮັບຮູ້ໄດ້ແນວໃດ? ..... 52
6.1.3 ຄວາມແຕກຕ່າງ ໃນການຈໍາແນກເພດເຫຼົ່ານີ້ ຈະສາມາດຖືກແກ້ໄຂໄດ້ແນວໃດ? ..... 52
6.2 ຄໍາແນະນໍາໃນການປັບປຸງ ກ່ຽວກັບການຕອບໂຕ້ດ້ານບົດບາດຍິງ-ຊາຍ ຂອງເທັກໂນໂລຢີ ..... 53
6.3. ຄໍາແນະນໍາກ່ຽວກັບການສ້າງສະພາບແວດລ້ອມທີ່ເອື້ອອໍານວຍ ..... 54
6.4. ໃນກໍລະນີ ທີ່ມີການວາງແຜນຈັດຕັ້ງປະຕິບັດເທັກໂນໂລຢີ ເພື່ອໃຫ້ເປັນສ່ວນໜຶ່ງຂອງກິດຈະກໍາໂຄງການ ຫຼື ແຜນງານ, ທ່ານມີຄໍາແນະນໍາແນະນໍາແນວໃດ. ..... 56
6.5. ຄໍາເຫັນ ແລະ ຂໍ້ສະເໜີແນະ ..... 57
6.5.1. ຈາກການຈັດກຸ່ມສົນທະນາ: ແບບສອບຖາມນີ້ ຊ່ວຍໃຫ້ຜູ້ເຂົ້າຮ່ວມໃນກຸ່ມສົນທະນາ ມີປະຕິກິລິຍາສະທ້ອນເຖິງການຕອບສະໜອງດ້ານບົດບາດຍິງ-ຊາຍ ໃນການຈັດຕັ້ງປະຕິບັດເທັກໂນໂລຢີ **SLM** ແລະ ວິທີການທີ່ກ່ຽວຂ້ອງ ແນວໃດແດ່ **?** ..... 57
6.5.2. ຄໍາຄິດເຫັນຈາກຜູ້ອໍານວຍຄວາມສະດວກ ..... 57
ເອກະສານຊ້ອນທ້າຍ ..... 57
1 ປະເພດການນໍາໃຊ້ທີ່ດິນ ..... 57
2. ກຸ່ມຂອງເທັກໂນໂລຢີ SLM ..... 59
3. ປະເພດການເຊື່ອມໂຊມຂອງດິນ ທີ່ຖືກແກ້ໄຂໂດຍນໍາໃຊ້ເທັກໂນໂລຢີ. ..... 61

# ພາກທີ 1: ຄຳແນະນຳກ່ຽວກັບ ການນຳໃຊ້ແບບສອບຖາມ

## 1 ຍິນດີຕ້ອນຮັບສູ່ WOCAT

ເປົ້າໝາຍຂອງເອກະສານ ແລະ ການປະເມີນການຈັດຕັ້ງປະຕິບັດ ກິດຈະກຳການຄຸ້ມຄອງທີ່ດິນແບບຍືນຍົງ (SLM) (ປະກອບດ້ວຍເທັກໂນໂລຢີ ແລະ ວິທີການຕ່າງໆ) ແມ່ນເພື່ອແບ່ງປັນ ແລະ ເຜີຍແຜ່ຄວາມຮູ້ອັນລ້ຳຄ່າໃນການຄຸ້ມຄອງທີ່ດິນ, ເປັນບ່ອນອີງພື້ນຖານໃຫ້ແກ່ການຕັດສິນໃຈ ແລະ ຜັນຂະຫຍາຍການຈັດຕັ້ງປະຕິບັດທີ່ດີ ໃຫ້ສາມາດເຜີຍແຜ່ອອກສູ່ວົງກວ້າງ. ອົງການ WOCAT ໄດ້ສຸມໃສ່ ແລະ ມີຄວາມພະຍາຍາມເພື່ອປ້ອງກັນ ແລະ ຫຼຸດຜ່ອນການເຊື່ອມໂຊມຂອງດິນ ແລະ ຟື້ນຟູທີ່ດິນທີ່ຊຸດໂຊມ ໃຫ້ກັບຄືນສູ່ສະພາບເດີມ ຫຼື ການຫຼຸດຜ່ອນການເຊື່ອມໂຊມຂອງດິນ (LDN) ໂດຍຜ່ານຂະບວນການ ແລະ ເຕັກນິກການປັບປຸງທີ່ດິນ.

ອົງການ WOCAT ສະໜັບສະໜູນຮູບແບບໃນການບັນທຶກ ແລະ ການປະເມີນເທັກໂນໂລຢີການຄຸ້ມຄອງທີ່ດິນແບບຍືນຍົງ (SLM) ແລະ ວິທີການຕ່າງໆ. ເຊິ່ງລວບລວມເຂົ້າກັນໃຫ້ກາຍເປັນຂະບວນການຈັດຕັ້ງປະຕິບັດ SLM. ໂດຍເນື້ອໃນແບບສອບຖາມ WOCAT ປະກອບມີສອງແບບສອບຖາມຄື: ແບບສອບຖາມກ່ຽວກັບເທັກໂນໂລຢີ SLM (ຫຼື ເອີ້ນວ່າ QT) ແລະ ແບບສອບຖາມກ່ຽວກັບ ແນວທາງໃນການຈັດຕັ້ງປະຕິບັດ SLM (ຫຼື ເອີ້ນວ່າ QA). ເຊິ່ງຄຳຖາມຫຼັກກ່ຽວກັບ SLM ສາມາດເຂົ້າເບິ່ງໄດ້ທີ່ເວັບໄຊທ໌ (https://www.wocat.net/en/global-slm-database/slm-practices-technologies-and-approaches). ສັງລວມແລ້ວ, ແບບສອບຖາມດັ່ງກ່າວ ຈະເປັນເຄື່ອງມືໃນການ ຈັດຕັ້ງປະຕິບັດບັນດາເຕັກນິກ SLM. ບັນດາເຕັກນິກຂໍ້ມູນທັງໝົດ ແມ່ນໄດ້ບັນທຶກໄວ້ ແລະ ສາມາດເຂົ້າເບິ່ງໄດ້ຢູ່ໃນຖານຂໍ້ມູນ WOCAT SLM ເຊິ່ງເປັນຖານຂໍ້ມູນອອນລາຍ ທີ່ທົ່ວໂລກສາມາດເຂົ້າເຖິງໄດ້ (https://qcat.wocat.net). ເຊິ່ງຖານຂໍ້ມູນດັ່ງກ່າວນີ້ ແມ່ນຮັບຮູ້ໂດຍ ສົນທິສັນຍາສະຫະປະຊາຊາດ ວ່າດ້ວຍການຕ້ານການກາຍເປັນທະເລຊາຍ (UNCCD) ແລະ ເປັນຖານຂໍ້ມູນທີ່ມີຄວາມສຳຄັນ ແລະ ສັງລວມບັນດາເຕັກນິກການຄຸ້ມຄອງທີ່ດິນແບບຍືນຍົງທີ່ດີ. ພ້ອມດຽວກັນ, ຖ້າຫາກມີໂມດູນ ຫຼື ຮູບແບບສະເພາະ ກໍ່ສາມາດເພີ່ມເຂົ້າໄປໃນແບບສອບຖາມ WOCAT (QT ແລະ QA) ເພື່ອເປັນການສ້າງຄວາມຮູ້ແບບເລິກເຊິ່ງຕື່ມອີກ ໃນແຕ່ລະບົດ ໂດຍສະເພາະ ແມ່ນບົດຜົນປະໂຫຍດຈາກຄາບອນ (Carbon Benefits) ຫຼື ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ.

ແບບສອບຖາມທີ່ນຳສະເໜີຢູ່ໃນເອກະສານນີ້ ແມ່ນໄດ້ຖືກພັດທະນາຂຶ້ນໂດຍການຮ່ວມມືກັບ UNCCD ແລະ ສະມາຊິກຜູ້ຊ່ຽວຊານ ແລະ ບັນດາປະເທດທີ່ກ່ຽວຂ້ອງ ເຊິ່ງແບບສອບຖາມນີ້ຈະເປັນເຄື່ອງມືເພື່ອປະເມີນກ່ຽວກັບບວງກງານບົດບາດຍິງ-ຊາຍ ຕໍ່ເທັກໂນໂລຢີການຄຸ້ມຄອງທີ່ດິນແບບຍືນຍົງ ແລະ ວິທີການ. ດັ່ງນັ້ນ, ແບບສອບຖາມກ່ຽວກັບບົດບາດຍິງ-ຊາຍ (ຕໍ່ຈາກນີ້ເອີ້ນວ່າ QG) ເຊິ່ງແມ່ນເຄື່ອງມືສະເພາະເພີ່ມເຕີມໃສ່ແບບສອບຖາມ QT ແລະ QA ຂອງ WOCAT ທີ່ມີຢູ່ແລ້ວ. QG ຈະເນັ້ນໃສ່ເທັກໂນໂລຢີການຄຸ້ມຄອງທີ່ດິນແບບຍືນຍົງ (SLM) ຂອງລາຍບຸກຄົນ ທີ່ຊຸມຊົນເປັນຜູ້ຈັດຕັ້ງປະຕິບັດ ແລະ ຂະບວນການອື່ນທີ່ກ່ຽວຂ້ອງທີ່ໄດ້ມີການນຳໃຊ້ເພື່ອເຜີຍແຜ່ເທັກໂນໂລຢີນີ້.

## 2 ຈຸດປະສົງຂອງ ແບບສອບຖາມ

ການຮັບຮອງເອົາເທັກໂນໂລຢີ SLM ຍັງມີອັດຕາສ່ວນທີ່ຕ່ຳ ເຊິ່ງຍັງຄົງເປັນຂໍ້ຄົງຄ້າງຫຼັກຂອງຄວາມຄືບໜ້າໃນການຈັດຕັ້ງປະຕິບັດວຽກງານການຕ້ານການເຊື່ອມໂຊມຂອງດິນ, ການຕ້ານການກາຍເປັນທະເລຊາຍ ແລະ ໄພແຫ້ງແລ້ງ (DLDD) ແລະ ການບັນລຸຕາມເປົ້າໝາຍການພັດທະນາແບບຍືນຍົງ (SDGs) ໂດຍສະເພາະແມ່ນເປົ້າໝາຍການຫຼຸດຜ່ອນການເຊື່ອມໂຊມຂອງດິນ (SDG 15.3). ຄວາມເຂົ້າໃຈກ່ຽວກັບບົດບາດທີ່ແຕກຕ່າງກັນຂອງເພດຍິງ ແລະ ເພດຊາຍ ໃນການຄຸ້ມຄອງທີ່ດິນ ແມ່ນມີຄວາມສຳຄັນຫຼາຍ ເນື່ອງຈາກວ່າແມ່ຍິງໃນທົ່ວໂລກແມ່ນກວມເອົາເຄິ່ງໜຶ່ງຂອງແຮງງານການຜະລິດສະບຽງອາຫານ.

ຈຸດປະສົງຂອງແບບສອບຖາມສະບັບນີ້ແມ່ນເພື່ອ:

i) ເພີ່ມທັດສະນະດ້ານບົດບາດຍິງ-ຊາຍ ຕໍ່ວິທີການ ແລະ ເທັກໂນໂລຢີ SLM ແລະ ປະເມີນການຕອບສະໜອງດ້ານບົດບາດຍິງ-ຊາຍ.

ii) ປະເມີນວິທີການຕອບສະໜອງດ້ານບົດບາດຍິງ-ຊາຍ ຕໍ່ເທັກໂນໂລຢີ SLM ແລະ ການປັບປຸງວິທີການຈັດຕັ້ງປະຕິບັດ ເພື່ອກ້າວໄປສູ່ການຍອມຮັບ ແລະ ການເຜີຍແຜ່, ທັງເຮັດໃຫ້ SLM ສ້າງປະໂຫຍດຕໍ່ແມ່ຍິງ ແລະ ຜູ້ຊາຍເທົ່າທຽມກັນ.

**ນິຍາມ**

**ການຄຸ້ມຄອງທີ່ດິນແບບຍືນຍົງ** (**SLM**) ແມ່ນການກຳນົດວິທີການນຳໃຊ້ຊັບພະຍາກອນທີ່ດິນໃຫ້ມີຄວາມຍືນຍົງ ລວມທັງດິນ, ນ້ຳ, ພືດພັນ ແລະ ສັດ. **https://www.wocat.net/en/glossary**

**ຂະບວນການ SLM:** ແມ່ນການກຳນົດແນວທາງ ແລະ ວິທີການນຳໃຊ້ ເພື່ອປະຕິບັດໜຶ່ງ ຫຼື ຫຼາຍເທັກໂນໂລຢີຂອງການຄຸ້ມຄອງທີ່ດິນແບບຍືນຍົງ. ເຊິ່ງປະກອບມີການສະໜັບສະໜູນດ້ານວິຊາການ ແລະ ເຄື່ອງມືຕ່າງໆ ເປັນຕົ້ນແມ່ນການມີສ່ວນຮ່ວມ ແລະ ພາລະບົດບາດຂອງພາກສ່ວນທີ່ກ່ຽວຂ້ອງຕ່າງໆ. ການຈັດຕັ້ງປະຕິບັດຂະບວນການນີ້ ແມ່ນສາມາດອ້າງອີງເຖິງໂຄງການ/ແຜນງານ ຫຼື ກິດຈະກຳທີ່ລິເລີ່ມປະຕິບັດໂດຍ ຜູ້ນຳໃຊ້ທີ່ດິນເອງ.
**https://qcat.wocat.net/en/wocat/approaches/view/approaches_3173/**

**ເທັກໂນໂລຢີ SLM:** ແມ່ນການປະຕິບັດທາງກາຍະພາບທີ່ຄວບຄຸມການເຊື່ອມໂຊມຂອງດິນ ແລະ ເສີມຂະຫຍາຍຜົນຜະລິດ ແລະ/ຫຼື ການບໍລິການລະບົບນິເວດອື່ນໆ. ເທັກໂນໂລຢີປະກອບດ້ວຍໜຶ່ງ ຫຼື ຫຼາຍມາດຕະການ ເຊັ່ນ: ມາດຕະການດ້ານການປູກຝັງ, ພືດ, ໂຄງສ້າງ, ແລະ ມາດຕະການດ້ານການຄຸ້ມຄອງ. ຕົວ ຢ່າງ: **https://qcat.wocat.net/en/wocat/technologies/view/technologies_3359/**

**ຜູ້ນຳໃຊ້ທີ່ດິນ:** ໝາຍເຖິງ ບຸກຄົນ / ນິຕິບຸກຄົນ ທີ່ຈັດຕັ້ງປະຕິບັດ / ເບິ່ງແຍງຮັກສາເທັກໂນໂລຢີ. ຄຳວ່າຜູ້ນຳໃຊ້ທີ່ດິນ ອາດຍັງໝາຍເຖິງຊາວກະສິກອນຂະໜາດນ້ອຍ ຫຼື ຂະໜາດໃຫຍ່, ກຸ່ມ, ສະຫະກອນ, ສະຖາບັນຂອງລັດ (ປ່າໄມ້ຂອງລັດ) ແລະ ອື່ນໆ.

**ຊຸມຊົນ:** ໝາຍເຖິງກຸ່ມປະຊາຊົນ ທີ່ແບ່ງປັນກັນເຂົ້າເຖິງ ແລະ ນຳໃຊ້ຊັບພະຍາກອນຮ່ວມກັນ ເພື່ອເປົ້າໝາຍໃດກໍ່ຕາມ ເຊິ່ງຕິດພັນກັບສະພາບແວດລ້ອມທາງພູມມີສາດໃດໜຶ່ງ. ສະມາຊິກຊຸມຊົນມີການແບ່ງປັນ ເຮັດວຽກຮ່ວມກັນ, ປະສານສົມທົບ ແລະ ປະສານງານກັນທາງກາຍຍະພາບ.[1]

**ເພດພາວະ:** ໝາຍເຖິງຄວາມແຕກຕ່າງທີ່ສ້າງຂຶ້ນໃນສັງຄົມໃນລັກສະນະ ແລະ ໂອກາດທີ່ກ່ຽວຂ້ອງກັບ ເພດຍິງ ຫຼື ເພດຊາຍ ແລະ ການພົວພັນທາງສັງຄົມ ລວມທັງຄວາມສຳພັນລະຫວ່າງ ແມ່ຍິງ ແລະ ຜູ້ຊາຍ. ເພດພາວະ ແມ່ນການກຳນົດສິ່ງທີ່ຄາດຫວັງ, ການອະນຸຍາດ ແລະ ການໃຫ້ຄຸນຄ່າໃນແມ່ຍິງ ຫຼື ຜູ້ຊາຍໃນສະພາບການໃດໜຶ່ງ. ໃນສັງຄົມສ່ວນໃຫຍ່, ແມ່ນມີຄວາມແຕກຕ່າງກັນ ແລະ ເກີດມີຄວາມບໍ່ສະເໝີພາບລະຫວ່າງແມ່ຍິງ ແລະ ຜູ້ຊາຍ ໃນບົດບາດ ແລະ ຄວາມຮັບຜິດຊອບທີ່ຖືກມອບໝາຍ, ການຈັດຕັ້ງປະຕິບັດກິດຈະກຳ ແລະ ການເຂົ້າເຖິງ ສິດການຄອບຄອງຊັບພະຍາກອນທີ່ດິນ ລວມໄປເຖິງໂອກາດໃນການຕັດສິນໃຈດ້ານການຄຸ້ມຄອງທີ່ດິນ. ເຊິ່ງຄວາມແຕກຕ່າງ ແລະ ຄວາມບໍ່ສະເໝີພາບລະຫວ່າງເພດຍິງ ແລະ ເພດຊາຍ ເຫຼົ່ານີ້ແມ່ນຖືກສ້າງຂຶ້ນໂດຍປະຫວັດສາດຂອງການພົວພັນທາງສັງຄົມ ແລະ ມີການປ່ຽນແປງຕາມການເວລາ ແລະ ວັດທະນະທຳທີ່ແຕກຕ່າງກັນ.[2]

**ຄວາມສະເໝີພາບລະຫວ່າງຍິງ-ຊາຍ:** ໝາຍເຖິງໂອກາດ, ສິດ ແລະ ຄວາມຮັບຜິດຊອບທີ່ສະເໝີພາບກັນຂອງແມ່ຍິງ ແລະ ຜູ້ຊາຍ, ເດັກນ້ອຍຍິງ ແລະ ເດັກນ້ອຍຊາຍ. ຄວາມສະເໝີພາບບໍ່ໄດ້ໝາຍຄວາມວ່າແມ່ຍິງ ແລະ ຜູ້ຊາຍ ແມ່ນຄືກັນ ແຕ່ແມ່ນໂອກາດ, ສິດ ແລະ ຄວາມຮັບຜິດຊອບຂອງແມ່ຍິງ ແລະ ຜູ້ຊາຍບໍ່ໄດ້ຂຶ້ນກັບວ່າເຂົາເຈົ້າເກີດເປັນແມ່ຍິງ ຫຼື ຜູ້ຊາຍ. ເຊິ່ງໝາຍຄວາມວ່າຜົນປະໂຫຍດ, ຄວາມຕ້ອງການ ແລະ ບຸລິມະສິດຂອງແມ່ຍິງ ແລະ ຜູ້ຊາຍໄດ້ຖືກພິຈາລະນາເທົ່າທຽມກັນ. ພ້ອມດຽວກັນ ຄວາມສະເໝີພາບລະຫວ່າງຍິງ-ຊາຍ ຍັງເປັນເປົ້າໝາຍທີ່ສຳຄັນ ໃນຕົວມັນເອງ - ບັນຫາສິດທິມະນຸດ ແລະ ຄວາມຍຸຕິທຳທາງສັງຄົມ - ບາດກ້າວໄປສູ່ຄວາມສະເໝີພາບທີ່ຫຼາຍຂຶ້ນ ຍັງສາມາດປະກອບສ່ວນເຂົ້າໃນການບັນລຸເປົ້າໝາຍທາງດ້ານເສດຖະກິດ ແລະ ສັງຄົມ ອື່ນໆອີກດ້ວຍ.[2]

**ການຕອບສະໜອງດ້ານບົດບາດຍິງ-ຊາຍ**: ເປັນຄຳສັບທີ່ໃຊ້ເພື່ອອະທິບາຍກົດໝາຍ, ນະໂຍບາຍ, ແຜນງານ ແລະ ການບໍລິການທີ່ສ້າງຂຶ້ນ ຫຼື ສິ່ງຕໍ່ໃຫ້: i) ຄຳນຶງເຖິງໂຄງສ້າງທີ່ມີຢູ່ ແລະ ການພົວພັນຂອງຄວາມບໍ່ສະເໝີພາບລະຫວ່າງຍິງ-ຊາຍ ແລະ ມີການສະແຫວງຫາຢ່າງຈິງຈັງ ເພື່ອໃຫ້ບັນລຸຕາມເປົ້າໝາຍ ແລະ ລົບລ້າງຄວາມບໍ່ສະເໝີພາບລະຫວ່າງຍິງ-ຊາຍ; ii) ກຳນົດ ແລະ ເອົາໃຈໃສ່ກ່ຽວກັບ ການປະກອບສ່ວນຂອງແມ່ຍິງ ແລະ ບົດບາດທີ່ສຳຄັນໃນຖານະຕົວແທນ ແລະ ຜູ້ນຳ, ເພື່ອສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ, ການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ແລະ ສິດທິມະນຸດຂອງແມ່ຍິງ.[3]

**ເທັກໂນໂລຢີທີ່ເປັນມິດກັບແມ່ຍິງ:** ເທັກໂນໂລຢີທີ່ສາມາດປັບຕົວເຂົ້າກັບຄວາມຕ້ອງການ ແລະ ທ່າແຮງຂອງແມ່ຍິງ ແມ່ນມີປະໂຫຍດຕໍ່ການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ.

**ການສົນທະນາເປັນກຸ່ມ:** ແມ່ນໜຶ່ງວິທີການຄົ້ນຄວ້າແບບຄຸນນະພາບ ແລະ ເຕັກນິກການເກັບກຳຂໍ້ມູນ ເຊິ່ງເລືອກເອົາກຸ່ມເປົ້າໝາຍ ເພື່ອສົນທະນາກ່ຽວກັບຫົວຂໍ້ໃດໜຶ່ງ ຫຼື ບັນຫາທີ່ຍາກເຈາະເລິກ, ທີ່ດຳເນີນໂດຍຜູ້ທີ່ຊ່ຽວຊານໃນການສົນທະນາ, ມີຜູ້ດຳເນີນການ/ຜູ້ອຳນວຍຄວາມສະດວກ

[1] Cislaghi, Beniamino. 2019. ທ່າແຮງຂອງວິທີການນຳພາຊຸມຊົນ ເພື່ອປ່ຽນແປງມາດຕະຖານດ້ານບົດບາດຍິງ-ຊາຍ ທີ່ເປັນອັນຕະລາຍ ຢູ່ໃນບັນດາປະເທດທີ່ມີລາຍໄດ້ຕ່ຳ ແລະ ປານກາງ. ຄວາມກ້າວໜ້າຂອງການຮຽນຮູ້ ແລະ ນະວັດຕະກຳກ່ຽວກັບມາດຕະຖານບົດບາດຍິງ-ຊາຍ (ALiGN)

[2] https://unstats.un.org/wiki/pages/viewpage.action?pageId=79009628

[3] ນິຍາມການເຮັດວຽກຂອງ UN-Women; ໂດຍການປະກອບສ່ວນຈາກ Carolyn Hannan. ດັ່ງທີ່ໄດ້ອ້າງອີງໄວ້ໃນ UN-Women, ເພື່ອໄປສູ່ການຈັດຕັ້ງປະຕິບັດສົນທິສັນຍາ ກ່ຽວກັບຄວາມຫຼາກຫຼາຍທາງຊີວະພາບ, (2018).

ຈາກພາຍນອກ.ວິທີການນີ້ໃຊ້ເພື່ອເກັບກໍາຂໍ້ມູນດ້ານທັດສະນະຄະຕິ, ຄວາມຮູ້ ແລະ ປະສົບການ, ແລະ ການປະຕິບັດຕົວຈິງຂອງຜູ້ເຂົ້າຮ່ວມ, ເພື່ອສົນທະນາ ແລກປ່ຽນກັນໃນ ລະຫວ່າງການສົນທະນາ[4]

## 3 ແມ່ນໃຜ ເປັນຜູ້ເກັບກໍາຂໍ້ມູນ

ການສັງລວມຂໍ້ມູນ, ດໍາເນີນການສໍາພາດທີ່ສໍາຄັນ ແລະ ອໍານວຍຄວາມສະດວກໃນການສົນທະນາເປັນກຸ່ມ ແມ່ນສາມາດດໍາເນີນໂດຍ ບຸກຄົນໃດໜຶ່ງ ຫຼື ເປັນກຸ່ມຄົນກໍ່ໄດ້. ໂດຍຫລັກການແລ້ວ, ການເຮັດສົນທະນາກຸ່ມຢ່າງໜ້ອຍຄວນມີສອງຄົນ ໃນການດໍາເນີນ ແລະ ເຮັດໜ້າທີ່ຕ່າງໆ ເພື່ອເຮັດໃຫ້ການສົນທະນາກຸ່ມດໍາເນີນງ່າຍຂຶ້ນ. ຜູ້ທີ່ດໍາເນີນກຸ່ມສົນທະນານີ້ ຄວນແບ່ງບົດບາດກັນຄື: ຜູ້ໜຶ່ງມີບົດບາດເປັນຜູ້ສັງລວມ ແລະ ອີກຜູ້ໜຶ່ງມີບົດບາດໃນການດໍາເນີນການສົນທະນາໃນການສົນທະນາ. ໃນບາງກໍລະນີ, ຜູ້ສັງລວມ ແລະ ຜູ້ອໍານວຍຄວາມສະດວກແມ່ນຜູ້ດຽວກັນ. ໃນບາງກໍລະ ນີ, ການແບ່ງບົດບາດຂອງຜູ້ອໍານວຍຄວາມສະດວກໃນກຸ່ມສົນທະນາ ກໍ່ອາດມີສອງຄົນ (ຫຼື ຫຼາຍກວ່ານັ້ນກໍ່ໄດ້). ສ່ວນໃຫຍ່ຜູ້ອໍານວຍຄວາມສະ ດວກ ໃນກຸ່ມສົນທະນາດ້ານເພດພາວະ ແມ່ນຖືກກໍານົດຂຶ້ນໂດຍອີງຕາມອົງປະກອບຂອງຜູ້ເຂົ້າຮ່ວມໃນກຸ່ມສົນທະນາເຊັ່ນ: ເພດຍິງເປັນຜູ້ອໍານວຍຄວາມສະດວກ ສໍາລັບກຸ່ມສົນທີ່ມີຜູ້ເຂົ້າຮ່ວມເປັນແມ່ຍິງ ແລະ ກຸ່ມປະສົມ ແລະ ຜູ້ຊາຍເປັນຜູ້ອໍານວຍຄວາມສະດວກ ທີ່ມີຜູ້ເຂົ້າຮ່ວມເປັນຜູ້ຊາຍ. ເຮັດແບບນີ້ກໍ່ເພື່ອໃຫ້ມີພື້ນທີ່ທີ່ປອດໄພສໍາລັບຜູ້ເຂົ້າຮ່ວມ ແລະ ເຮັດໃຫ້ການສົນທະນາ ໄດ້ຮັບຜົນດີຫຼາຍຂຶ້ນ.

**ຜູ້ສັງລວມຂໍ້ມູນ ມີໜ້າທີ່ດັ່ງຕໍ່ໄປນີ້:**

**ກ່ອນ ການສົນທະນາກຸ່ມ:**
— ການສັງລວມເອົາຂໍ້ມູນທີ່ກ່ຽວຂ້ອງ ຈາກຖານຂໍ້ມູນຂອງ WOCAT ເພື່ອລວບລວມເຂົ້າໃນ ແບບສອບຖາມກ່ຽວກັບບົດບາດຍິງ-ຊາຍ (QG)
— ໃຫ້ຄໍາປຶກສາກ່ຽວກັບຂໍ້ມູນ ແລະ ການທົບທວນຂໍ້ມູນມີສອງທີ່ມີຢູ່ແລ້ວ
— ການກໍານົດ ແລະ ການສໍາພາດຜູ້ໃຫ້ຂໍ້ມູນ ທີ່ສໍາຄັນ
— ກໍານົດ ແລະ ສະຫຼຸບໂດຍຫຍໍ້ໃຫ້ຜູ້ອໍານວຍຄວາມສະດວກ ເພື່ອດໍາເນີນການສົນທະນາເປັນກຸ່ມ.
— ຕື່ມຄໍາຖາມ ທີ່ຕອບໂດຍຜູ້ໃຫ້ຂໍ້ມູນຫຼັກ ແລະ ຕື່ມຄໍາຕອບຄາວຄາວໄວ້ກ່ອນ ໃສ່ QG ກ່ອນສົ່ງເອົາໃຫ້ຜູ້ອໍານວຍຄວາມສະດວກ.
— ດໍາເນີນການທົດລອງ / ທົດສອບ ເພື່ອກະກຽມສໍາລັບການສົນທະນາກຸ່ມ ຖ້າເປັນການນໍາໃຊ້ແບບສອບຖາມ QG ເປັນຄັ້ງທໍາອິດ.

**ໃນລະຫວ່າງການສົນທະນາເປັນກຸ່ມ (ໃນກໍລະນີ ລາວເປັນທັງຜູ້ອໍານວຍຄວາມສະດວກ):**
— ເກັບກໍາ ແລະ ປະເມີນຂໍ້ມູນ ແຍກຕາມເພດ ໂດຍໃຊ້ແບບສອບຖາມ
— ຖ່າຍຮູບ ແລະ ວີດີໂອຂອງການສົນທະນາກຸ່ມ ແລະ ພິຈາລະນາການນໍາໃຊ້ເທັກໂນໂລຍີຢູ່ພາກສະໜາມ ຫຼັງຈາກການສົນທະນາກຸ່ມ ສໍາເລັດ
— ຕັ້ງຄ່າໂປຣໄຟລ໌ ຜູ້ຊົມໃຊ້ຢູ່ໃນເວັບໄຊທ໌ WOCAT
— ເພີ່ມກໍລະນີສຶກສາກ່ຽວກັບການຕອບສະໜອງດ້ານບົດບາດຍິງ-ຊາຍ ຕໍ່ການຄຸ້ມຄອງທີ່ດິນແບບຍືນຍົງ (SLM) ໃສ່ຖານຂໍ້ມູນ WOCAT
— ເພີ່ມຜູ້ອໍານວຍຄວາມສະດວກ ເປັນຜູ້ແກ້ໄຂ ກໍລະນີສຶກສາໃໝ່ກ່ຽວກັບການຕອບສະໜອງດ້ານບົດບາດຍິງ-ຊາຍ ຕໍ່ SLM
— ປ້ອນຂໍ້ມູນທົ່ວໄປຈາກແບບສອບຖາມເຂົ້າໄປໃນຖານຂໍ້ມູນ (ຄໍາຖາມຈາກ ບົດທີ 1 ແລະ ບົດທີ 2)
— ປ້ອນຂໍ້ມູນການປະເມີນ ແລະ ຮູບພາບເຂົ້າໄປໃນຖານຂໍ້ມູນ WOCAT ອອນໄລນ໌ (ໃນກໍລະນີ ລາວເປັນທັງຜູ້ອໍານວຍຄວາມສະດວກ)
— ກວດກາຄືນຂໍ້ມູນທີ່ປ້ອນຈາກ ຜູ້ອໍານວຍຄວາມສະດວກ

**ຜູ້ອໍານວຍຄວາມສະດວກ ມີໜ້າທີ່ດັ່ງຕໍ່ໄປນີ້:**

**ກ່ອນ ການສົນທະນາກຸ່ມ:**

[4] https://www.swisstph.ch/fileadmin/user_upload/SwissTPH/Topics/Society_and_Health/Focus_Group_Discussion_Manual_van_Eeuwijk_Angehrn_Swiss_TPH_2017.pdf

— ການກະກຽມກິດຈະກຳ ຮ່ວມກັບຜູ້ສັງລວມຂໍ້ມູນ
— ທຳຄວາມເຂົ້າໃຈກັບເທັກໂນໂລຢີ SLM ທີ່ຈັດຕັ້ງປະຕິບັດຢູ່ໃນຊຸມຊົນ
— ກະກຽມການສົນທະນາກຸ່ມ ໂດຍການອ່ານແບບສອບຖາມ ແລະ ສ້າງຄວາມຄຸ້ນເຄີຍກັບສະພາບການທ້ອງຖິ່ນຂອງຊຸມຊົນ

**ໃນລະຫວ່າງການສົນທະນາກຸ່ມ:**
— ເກັບກຳ ແລະ ປະເມີນຂໍ້ມູນ ແຍກຕາມເພດ ໂດຍການນຳໃຊ້ແບບສອບຖາມ
— ຖ່າຍຮູບ ແລະ ວີດີໂອຂອງການສົນທະນາກຸ່ມ ແລະ ພິຈາລະນາການນຳໃຊ້ເທັກໂນໂລຢີຢູ່ພາກສະໜາມ ຫຼັງຈາກການສົນທະນາກຸ່ມ ສຳເລັດ
— ຕັ້ງຄ່າໂປຣໄຟລ໌ ຜູ້ຊົມໃຊ້ຢູ່ໃນເວັບໄຊທ໌ WOCAT
— ປ້ອນຂໍ້ມູນການປະເມີນ ແລະ ຮູບພາບເຂົ້າໄປໃນຖານຂໍ້ມູນ WOCAT ອອນໄລນ໌ (ຄຳຖາມຈາກ ບົດທີ 3-6)

**ຜູ້ສັງລວມຂໍ້ມູນ ແລະ ຜູ້ອຳນວຍຄວາມສະດວກ ຄວນມີທັກສະ ແລະ ປະສົບການຕໍ່ໄປນີ້:**

— ມີຄວາມຄຸ້ນເຄີຍກັບເຕັກນິກການອຳນວຍຄວາມສະດວກ ແລະ ວິທີການນຳພາການປຶກສາຫາລືແບບມີສ່ວນຮ່ວມ, ໃຫ້ແນ່ໃຈວ່າໄດ້ຍິນທຸກສຽງເນື້ອໃນການສົນທະນາ.
— ມີປະສົບການໃນການຈັດການສົນທະນາກຸ່ມ, ຮັບປະກັນວ່າ ການຈັດກຸ່ມສົນທະນາໃຫ້ມີຄວາມສົມດຸນລະຫວ່າງຈຳນວນຍິງ ແລະ ຊາຍ ເທົ່າທີ່ຈະເຮັດໄດ້ ແລະ ເກັບກຳຂໍ້ມູນຢ່າງທົ່ວເຖິງ ແລະ ເຊື່ອຖືໄດ້.
— ມີທັກສະການສື່ສານ ແລະ ບໍລິຫານເວລາ ໄດ້ເປັນຢ່າງດີ
— ສາມາດເວົ້າພາສາທ້ອງຖິ່ນໄດ້
— ມີລະດັບຄວາມຮູ້ຄວາມສາມາດ ໃນດ້ານຊັບພະຍາກອນທຳມະຊາດ, ການຈັດຕັ້ງປະຕິບັດການຄຸ້ມຄອງທີ່ດິນ, ບັນຫາກ່ຽວກັບເພດພາວະ, ບົດ ບາດຍິງ-ຊາຍ, ສະພາບລວມຂອງຊຸມຊົນ.
— ຮູ້ສະພາບ ແລະ ຈຸດພິເສດຂອງທ້ອງຖິ່ນ (ວັດທະນະທຳ-ສັງຄົມ, ຊີວະກາຍຍະພາບ, ການນຳໃຊ້ທີ່ດິນ, ການເຊື່ອມໂຊມຂອງດິນ ແລະ ການຄຸ້ມຄອງທີ່ດິນແບບຍືນຍົງ SLM ແລະ ອື່ນໆ).
— ມີທັກສະໃນການສ້າງຄວາມສຳພັນທີ່ໄວ້ວາງໃຈກັບຜູ້ມີສ່ວນກ່ຽວຂ້ອງ ແລະ ສະມາຊິກໃນຊຸມຊົນ ທີ່ມີສ່ວນກ່ຽວຂ້ອງກັບ SLM
— ມີຄວາມຄຸ້ນເຄີຍກັບຖານຂໍ້ມູນ WOCAT ແລະ ວິທີການໃນການບັນທຶກຂໍ້ມູນ ກ່ຽວກັບວິທີການ ແລະ ເທັກໂນໂລຢີ SLM ສຳລັບກໍລະນີສຶກສາທີ່ກ່ຽວຂ້ອງກັບ QG
— ມີຄວາມຄຸ້ນເຄີຍກັບ ແບບສອບຖາມ ກ່ຽວກັບບົດບາດຍິງ-ຊາຍ (QG) ແລະ ມີຄວາມພ້ອມໃນການກຳນົດວິທີການທີ່ດີທີ່ສຸດ ເພື່ອໃຫ້ບັນລຸຜົນໄດ້ຮັບທີ່ຕ້ອງການ
— ພະຍາຍາມສ້າງຄຳຖາມ ແລະ ໃຊ້ພາສາທີ່ງ່າຍດາຍ ແທນທີ່ຈະເປັນຄຳຖາມທີ່ຂຽນອອກມາ, ແປຄຳຖາມຂອງ QG ເປັນພາສາທີ່ເຂົ້າໃຈງ່າຍດາຍ ແລະ ປະຊາຊົນທ້ອງຖິ່ນສາມາດເຂົ້າໃຈໄດ້ງ່າຍ.

# 4 ວິທີການ ນຳໃຊ້ແບບສອບຖາມ

## 4.1 ໂຄງສ້າງ

ແບບສອບຖາມ ກ່ຽວກັບບົດບາດຍິງ-ຊາຍ (QG) ມີຈຸດປະສົງໃນການປະເມີນການຕອບສະໜອງດ້ານບົດບາດຍິງ-ຊາຍ ຕໍ່ວິທີການ ແລະ ເທັກໂນໂລຢີ SLM ແລະ ການເກັບກຳຂໍ້ມູນ, ວິເຄາະຂໍ້ມູນ ໂດຍແຍກຕາມເພດ. ແບບສອບຖາມ ການຕອບສະໜອງດ້ານບົດບາດຍິງ-ຊາຍ ຕໍ່ SLM ອາດຈະເຊື່ອມໂຍງກັບວິທີການ ແລະ ເທັກໂນໂລຢີ SLM ທີ່ບັນທຶກໄວ້ໃນຖານຂໍ້ມູນໂລກ ຂອງ WOCAT (https://qcat.wocat.net/en/wocat/). ຢ່າງໃດກໍຕາມ, ມັນກໍ່ມີຄວາມເປັນໄປໄດ້ທີ່ຈະນຳໃຊ້ QG ໂດຍບໍ່ມີເອກະສານເທັກໂນໂລຢີ ແລະ ວິທີການ ຢູ່ໃນຖານຂໍ້ມູນ, ໃນກໍລະນີນີ້, ຂໍ້ມູນເພີ່ມເຕີມກ່ຽວກັບເທັກໂນໂລຢີ ທີ່ຖືກປະຕິບັດໂດຍຊຸມຊົນ ຕ້ອງໄດ້ຮັບການບັນທຶກພາຍໃນ ແບບສອບຖາມ QG.

**QG ປະກອບດ້ວຍ 6 ຫົວຂໍ້ຍ່ອຍຄື:**

- ບົດທີ **1:** ຂໍ້ມູນທົ່ວໄປກ່ຽວກັບຜູ້ໃຫ້ຂໍ້ມູນ ແລະ ເງື່ອນໄຂກ່ຽວກັບການນຳໃຊ້ຂໍ້ມູນ
- ບົດທີ **2:** ລາຍລະອຽດຫຍໍ້ ເນື້ອໃນຂອງເທັກໂນໂລຢີ **SLM** (ແລະ ວິທີການທີ່ກ່ຽວຂ້ອງ (ຖ້າມີ))

- ບົດທີ **3:** ຂໍ້ມູນກ່ຽວກັບຜູ້ອໍານວຍຄວາມສະດວກ ແລະ ຜູ້ເຂົ້າຮ່ວມໃນການສົນທະນາກຸ່ມ
- ບົດທີ **4:** ສະພາບຂອງຊຸມຊົນບ່ອນທີ່ມີການນໍາໃຊ້ ເທັກໂນໂລຍີ ແລະ ວິທີການທີ່ກ່ຽວຂ້ອງ (ຖ້າມີ)
- ບົດທີ **5:** ການຈັດຕັ້ງປະຕິບັດ ເທັກໂນໂລຍີ **SLM** ແລະ ວິທີການທີ່ກ່ຽວຂ້ອງ (ຖ້າມີ) ແລະ ຜົນໄດ້ຮັບ
- ບົດທີ **6:** ຄໍາແນະນໍາ, ຂໍ້ຄິດເຫັນ ວິທີການປັບປຸງແກ້ໄຂ ການຕອບສະໜອງດ້ານບົດບາດຍິງ-ຊາຍ ຂອງເທັກໂນໂລຍີ **SLM** ແລະ ວິທີການທີ່ກ່ຽວຂ້ອງ (ຖ້າມີ) ເພື່ອການນໍາໄປໝູນໃຊ້ ຢ່າງມີປະສິດທິພາບ.

**<u>ໝາຍເຫດ:</u>**

- ຖ້າໃນຖານຂໍ້ມູນທົ່ວໂລກ ມີເທັກໂນໂລຍີນີ້ແລ້ວ, ຄໍາຖາມສະເພາະໃນ QG ສາມາດຕອບໄດ້ໂດຍການດຶງເອົາຂໍ້ມູນຈາກເທັກໂນໂລຍີ ແລະ ວິທີການທີ່ກ່ຽວຂ້ອງ (ຖ້າມີ) ເຂົ້າໃນຖານຂໍ້ມູນ SLM. ການອ້າງອີງເຖິງການເຂົ້າວິທີການ ແລະ ເທັກໂນໂລຍີ ແລະ ຄໍາຖາມທີ່ກ່ຽວຂ້ອງແມ່ນລະບຸຢູ່ໃນວົງເລັບຂອງເນື້ອໃນຂ້າງລຸ່ມນີ້.
- ໂດຍທົ່ວໄປແລ້ວ, ຄໍາຖາມແມ່ນຖືກສ້າງຂື້ນໃນລັກສະນະທີ່ ຄໍາຕອບສາມາດຈັດປະເພດໄດ້ຫຼາຍເທົ່າທີ່ເປັນໄປໄດ້ ເພື່ອອໍານວຍຄວາມສະ ດວກໃນການວິເຄາະຂໍ້ມູນ. ທັງນີ້ກໍ່ເພື່ອໃຫ້ເປັນວິທີການທີ່ມີໂຄງສ້າງ ແທນທີ່ຈະຕັ້ງຄໍາຖາມ. ແນວໃດກໍ່ຕາມ, ກໍ່ຍັງມີຄວາມເປັນໄປໄດ້ວ່າ - ພາຍໃຕ້ຫມວດ 'ອື່ນໆ (ລະບຸ)' - ເພື່ອເພີ່ມຫມວດຫມູ່ທີ່ຂາດຫາຍໄປ ແລະ - ພາຍໃຕ້ຖັນ 'ອະທິບາຍ / ຄໍາເຫັນ' - ເພື່ອໃຫ້ລາຍລະອຽດເພີ່ມເຕີມ ແລະ ອະທິບາຍໃນຮູບແບບຂໍ້ຄວາມເປີດ.
- ທັງນີ້ມັນກໍ່ຂຶ້ນກັບຜູ້ອໍານວຍຄວາມສະດວກທີ່ຈະຕັດສິນໃຈວ່າ ລາວຕ້ອງການຖາມຄໍາຖາມ ຫຼື ອະນຸຍາດໃຫ້ມີການສົນທະນາແບບເປີດ ກ້ວາງ ແລະ ມີການຈໍາກັດໜ້ອຍລົງ ແລະ ຫຼັງຈາກນັ້ນຈຶ່ງສັງລວມຂໍ້ມູນທີ່ໄດ້ຮັບນີ້ ໃສ່ຮູບແບບຂອງ QG ຕາມພາຍຫຼັງ.
- **ຕອບທຸກຄໍາຖາມ.** ຖ້າບາງຄໍາຖາມບໍ່ສາມາດໃຊ້ ຫຼື ບໍ່ກ່ຽວຂ້ອງ ແມ່ນເລືອກເອົາ ຕົວເລືອກຂອງຄໍາຕອບເປັນ "ບໍ່ສາມາດໃຊ້ໄດ້" ຫຼື "ບໍ່ກ່ຽວຂ້ອງ" ໃນບ່ອນທີ່ມີຢູ່ ຫຼື ຂີດໝາຍເປັນ n/a ໃສ່ໃນຊ່ອງຕື່ມຄໍາເຫັນ.
- ບາງຄໍາຖາມມີຄໍາຕອບທາງເລືອກດຽວ ແລະ ບາງຄໍາຖາມແມ່ນມີຫຼາຍທາງເລືອກຄໍາຕອບ. ທ່ານສາມາດກໍານົດປະເພດຄໍາຖາມໂດຍອີງໃສ່ປະເດັນທີ່ສະແດງຢູ່ ໃນຄໍາຕອບ: ❍ ເລືອກໄດ້ຄໍາຕອບດຽວ ☐ ເລືອກໄດ້ຫຼາຍຄໍາຕອບ. ກະລຸນາເບິ່ງໃຫ້ແນ່ໃຈວ່າ ໄດ້ຕອບຄໍາຖາມຕາມຢ່າງມີຄວາມເຫມາະສົມ ເພື່ອຮັບປະກັນວ່າຈະບໍ່ມີບັນຫາໃດໆໃນເວລາທີ່ການບັນທຶກຄໍາຕອບ ລົງໃນຖານຂໍ້ມູນອອນໄລນ໌.
- ນໍາໃຊ້ແບບສອບຖາມແຍກຕ່າງຫາກ ສໍາລັບແຕ່ລະກຸ່ມສົນທະນາ

## 4.2 ແຫຼ່ງທີ່ມາຂອງຂໍ້ມູນ ແລະ ຂໍ້ມູນ

ຜູ້ສັງລວມຂໍ້ມູນ/ຜູ້ອໍານວຍຄວາມສະດວກ ເກັບກໍາຂໍ້ມູນສໍາລັບ QG ໄດ້ໃນສາມວິທີຕໍ່ໄປນີ້. ໄອຄອນທີ່ສະແດງຢູ່ດ້ານລຸ່ມແມ່ນໃຊ້ໃນແບບສອບຖາມເພື່ອສະແດງໃຫ້ ຜູ້ສັງລວມຂໍ້ມູນ/ຜູ້ອໍານວຍຄວາມສະດວກ ຮູ້ວິທີໃນການເກັບກໍາຂໍ້ມູນ. ຂໍ້ມູນການປະເມີນທີ່ໄດ້ຮັບຈາກແຫຼ່ງຂໍ້ມູນພາຍນອກ ແລະ ການຕອບຄໍາຖາມໂດຍຜູ້ໃຫ້ຂໍ້ມູນທີ່ສໍາຄັນ ແມ່ນຄວນມີການກວດສອບຄືນໂດຍກຸ່ມສົນທະນາ ໃນຊ່ວງດໍາເນີນການສົນທະນາ. **ຖ້າກຸ່ມບໍ່ເຫັນດີຕໍ່ຄໍາຕອບຂອງຜູ້ໃຫ້ຂໍ້ມູນຫຼັກ ແມ່ນເອົາຄໍາຕອບຂອງກຸ່ມຕື່ມລົງໄປແທນ.**

| | |
|---|---|
|  | **ຈາກແຫຼ່ງຂໍ້ມູນພາຍນອກ:** ເຊັ່ນຊຸດຂໍ້ມູນແຫ່ງຊາດທີ່ມີຢູ່ແລ້ວ, ບົດລາຍງານ, ບົດຄວາມວິທະຍາສາດ ແລະ ອື່ນໆ. ແລະ ໂດຍການປຶກສາຫາລືຢູ່ພາຍໃນຖານຂໍ້ມູນ WOCAT SLM. ການສັງລວມຂໍ້ມູນນີ້ແມ່ນເກີດຂຶ້ນກ່ອນທີ່ຈະໄປ ສອບຖາມຊຸມຊົນແລະ ການອໍານວຍຄວາມສະດວກໃນການສົນທະນາເປັນກຸ່ມ. |
|  | **ຈາກຜູ້ໃຫ້ຂໍ້ມູນຫຼັກ:** ຈາກຫນ່ວຍງານບໍລິຫານຂັ້ນຕໍ່າສຸດໃນຊຸມຊົນ ເຊັ່ນ: ສະພາຊຸມຊົນ ຫຼື ນາຍບ້ານ. ຕ້ອງຕິດຕໍ່ຜູ້ໃຫ້ຂໍ້ມູນຫຼັກກ່ອນທີ່ຈະດໍາເນີນການສົນທະນາກຸ່ມ. ນອກນີ້, ຍັງສາມາດປຶກສາຫາລືເພື່ອຢືນຢັນຂໍ້ມູນທີ່ໄດ້ຮັບຢູ່ໃນລະຫວ່າງການສົນທະນາກຸ່ມ. ຜູ້ໃຫ້ຂໍ້ມູນຫຼັກ ທັງຍິງ ແລະ ຊາຍຄວນຖືກກໍານົດ ໃຫ້ມີຄວາມເທົ່າທຽມກັນ. |
|  | **ຈາກການສົນທະນາກຸ່ມ:** ໂດຍການຕັ້ງຄໍາຖາມຕໍ່ກັບກຸ່ມຜູ້ໃຊ້ທີ່ດິນ/ບຸກຄົນຈາກຊຸມຊົນທີ່ໄດ້ຈັດຕັ້ງປະຕິບັດ ຫຼື ກໍາລັງຈັດຕັ້ງປະຕິບັດເຕັກໂນໂລຢູ່ ແລະ ວິທີການທີ່ກ່ຽວຂ້ອງ. ສະມາຊິກທັງໝົດໃນກຸ່ມຄວນມີໂອກາດສະແດງຄໍາເຫັນ ແລະ |

| | |
|---|---|
| | ຄວນທີ່ຈະນໍາເອົາຄໍາຄິດເຫັນຂອງເຂົາເຈົ້າມາສະເໜີ ແລະ ແລກປ່ຽນກັນກັບຄວາມຄິດເຫັນຂອງຜູ້ເຂົ້າຮ່ວມອື່ນໆ. |

## 4.3 ການສົນທະນາເປັນກຸ່ມ

ການສົນທະນາເປັນກຸ່ມ ແມ່ນກິດຈະກໍາຫຼັກທີ່ຖືກດໍາເນີນ ແລະ ປະຕິບັດເພື່ອເກັບກໍາຂໍ້ມູນທີ່ກ່ຽວຂ້ອງໃນແບບສອບຖາມ QG. ວິທີການນີ້ ແມ່ນອີງໃສ່ການສົນທະນາ, ແລກປ່ຽນຄວາມຮູ້ພາຍໃນກຸ່ມ ແລະ ຊຸມຊົນ, ເຊິ່ງຖ້າບໍ່ດັ່ງນັ້ນຈະເປັນການຍາກທີ່ຈະສາມາດກໍານົດ ແລະ ຊີ້ແຈງ ເວລາໄດ້ຮັບຄໍາຕອບໃນຊ່ວງການດໍາເນີນການສໍາພາດເປັນລາຍບຸກຄົນຈາກຫຼາຍໆຄົນ. ໃນລະຫວ່າງການສົນທະນາ, ຄວນໃຫ້ຜູ້ເຂົ້າຮ່ວມບັນຍາຍສະພາບລວມ, ສະແດງຄວາມຄິດເຫັນທີ່ແຕກຕ່າງກັນ ໂດຍອີງໃສ່ປະສົບການ ແລະ ທັດສະນະຂອງເຂົາເຈົ້າທີ່ພົບພໍ້ຕົວຈິງ.

**<u>ການຄັດເລືອກຜູ້ເຂົ້າຮ່ວມ ແລະ ການຈັດກຸ່ມສົນທະນາ</u>**

ເພື່ອຈັດຕັ້ງການສົນທະນາກຸ່ມ, ຜູ້ສັງລວມຂໍ້ມູນ/ຜູ້ອໍານວຍຄວາມສະດວກ ຕ້ອງໄດ້ຊ່ວຍໃນການກໍານົດ ແລະ ແຈ້ງເຊີນຜູ້ນໍາໃຊ້ທີ່ດິນຂອງຊຸມຊົນ ທີ່ໄດ້ຈັດຕັ້ງປະຕິບັດ ຫຼື ກໍາລັງຈັດຕັ້ງປະຕິບັດກິດຈະກໍາການນໍາໃຊ້ເທັກໂນໂລຢີ ແລະ ວິທີການທີ່ກ່ຽວຂ້ອງ (ຖ້າມີ). ການສົນທະນາກຸ່ມ ສາມາດລວມເອົາຜູ້ທີ່ໄດ້ບັນທຶກເທັກໂນໂລຢີ ຫຼື ຜູ້ທີ່ເຂົ້າຮ່ວມໃນວິທີການທີ່ກ່ຽວຂ້ອງ ທີ່ມີການບັນທຶກໄວ້.

ຖ້າຫາກມີຄວາມຈໍາເປັນ ແລະ ຮັບປະກັນໃຫ້ກອບລວມເອົາສະພາບຂອງສັງຄົມຢ່າງທົ່ວເຖິງ ແລະ ໃຫ້ໄດ້ຮັບຂໍ້ມູນການແຍກຕາມເພດ, **ຄວນຈັດການສົນທະນາກຸ່ມຫຼາຍກວ່າໜຶ່ງກຸ່ມ.** ໂດຍສະເພາະແມ່ນກຸ່ມທີ່ມີຄວາມອ່ອນໄຫວເຊັ່ນ: ຊົນເຜົ່າ ຫຼື ກຸ່ມອາຍຸທີ່ແຕກຕ່າງກັນ, ແມ່ນຄວນພິຈາລະນາແຍກກຸ່ມສະເພາະ.

**ສິ່ງທີ່ຄວນພິຈາລະນາໃນການຈັດກຸ່ມສົນທະນາ ມີດັ່ງນີ້:**

- ແຍກເພດຍິງ (ໄວໜຸ່ມ[5], ຜູ້ໃຫຍ່, ຜູ້ສູງອາຍຸ[6])
- ແຍກຜູ້ຊາຍ (ໄວໜຸ່ມ, ຜູ້ໃຫຍ່, ຜູ້ສູງອາຍຸ)
- ກຸ່ມປະສົມ (ໄວໜຸ່ມ, ຜູ້ໃຫຍ່, ຜູ້ສູງອາຍຸ ແລະ ຄວາມສະເໝີພາບລະຫວ່າງຍິງ ແລະ ຊາຍ)

ນອກຈາກນັ້ນ, ຍັງສາມາດຊີ້ບອກໄດ້ວ່າພວກເຂົາເປັນຕົວແທນຂອງກຸ່ມສັງຄົມ ຫຼື ວັດທະນະທໍາສະເພາະໃດໜຶ່ງ (ຊົນເຜົ່າ, ຊົນເຜົ່າພື້ນ ເມືອງ, ຊັ້ນວັນນະ, ສາສະໜາ, ... ) ເຊິ່ງຜູ້ສັງລວມຂໍ້ມູນ / ຜູ້ອໍານວຍຄວາມສະດວກ ໂດຍອີງໃສ່ສະພາບຄວາມເປັນຈິງ ແລ້ວຕ້ອງໄດ້ຕັດສິນໃຈເອງ ສໍາລັບການຈັດປະເພດກຸ່ມສົນທະນາ ທີ່ຈະສ້າງຕັ້ງຂຶ້ນ.

ກຸ່ມທີ່ມີລັກສະນະຄ້າຍຄຽງກັນ ແມ່ນຊຸກຍູ້ເປັນກຸ່ມຕົວແທນຜູ້ເຂົ້າຮ່ວມ ທີ່ມີຊີວິດການເປັນຢູ່ທີ່ດີ ແລະ ສາມາດເກັບກໍາເອົາຂໍ້ມູນສໍາມະໂນຕ່າງໆ. ກຸ່ມທີ່ມີຄວາມຫຼາກຫຼາຍ (ກຸ່ມປະສົມ) ແມ່ນຄວນກໍານົດເອົາຄົນທີ່ມີບົດບາດ ແລະ ປະສົບການທີ່ແຕກຕ່າງກັນມາຮ່ວມ ແລະ ອາດຈະໃຫ້ຜົນໄດ້ຮັບທີ່ບໍ່ຄາດຄິດ, ໄດ້ຮັບຂໍ້ມູນທີ່ແຕກຕ່າງ ແລະ ກວ້າງຂວາງ ໄດ້.

ຖ້າດໍາເນີນການສົນທະນາ ເປັນຫຼາຍໆກຸ່ມ, **ແຕ່ລະກຸ່ມຈະຕ້ອງໄດ້ຕື່ມແບບສອບຖາມແຍກຕ່າງຫາກ.**

ແຕ່ລະກຸ່ມຄວນປະກອບດ້ວຍຜູ້ເຂົ້າຮ່ວມ 6-12 ຄົນ. ຕາຕະລາງຂອງຜູ້ເຂົ້າຮ່ວມ, ບັນທຶກຊື່ຂອງເຂົາເຈົ້າ (ສາມາດຈະເລືອກບັນທຶກ ຫຼື ບໍ່ບັນທຶກ ກໍໄດ້), ອາຍຸ ແລະ ລັກສະນະທີ່ກ່ຽວຂ້ອງອື່ນໆ ແມ່ນຕ້ອງໄດ້ຕື່ມຂໍ້ມູນໃສ່ ເພື່ອໃຫ້ໄດ້ພາບລວມຂອງຕົວແທນທີ່ຢູ່ໃນຊຸມຊົນ ທີ່ກໍາລັງນໍາໃຊ້ເທັກໂນໂລຢີ ແລະ ວິທີການທີ່ກ່ຽວຂ້ອງ (ຖ້າມີ)

**<u>ການດໍາເນີນ ການສົນທະນາເປັນກຸ່ມ</u>**

---

[5] ບໍ່ມີຄໍານິຍາມສາກົນທີ່ຕົກລົງກັນທົ່ວໄປກ່ຽວກັບກຸ່ມໄວໜຸ່ມ. ຢ່າງໃດກໍຕາມ, ສໍາລັບຈຸດປະສົງທາງສະຖິຕິ, ສະຫະປະຊາຊາດໄດ້ໃຫ້ຄໍານິຍາມວ່າ 'ໄວໜຸ່ມ' ແມ່ນບຸກຄົນທີ່ມີອາຍຸຢູ່ລະຫວ່າງ 15 ຫາ 24 ປີ - ໂດຍບໍ່ກະທົບກັບຄໍານິຍາມອື່ນໆ ທີ່ບັນດາປະເທດສະມາຊິກ - ໄດ້ກໍານົດ. ຄໍານິຍາມນີ້, ໄດ້ກໍານົດຂຶ້ນຢູ່ໃນໄລຍະຂອງການກະກຽມ ສໍາລັບປີຊາວໜຸ່ມສາກົນ (1985) (ເບິ່ງ A/36/215), ໄດ້ຮັບການຮັບຮອງໂດຍກອງປະຊຸມໃຫຍ່ສະຫະປະຊາຊາດ ໃນມະຕິທີ 36/28 ປີ 1981. ສະຖິຕິທັງໝົດຂອງອົງການສະຫະປະຊາຊາດ ກ່ຽວກັບຊາວໜຸ່ມ ແມ່ນອີງໃສ່ຄໍານິຍາມນີ້, ເຊິ່ງສະທ້ອນໃຫ້ເຫັນຢູ່ໃນປຶ້ມບັນທຶກປະຈໍາປີຂອງສະຖິຕິທີ່ຕີພິມ ໂດຍອົງການສະຫະປະຊາຊາດ ກ່ຽວກັບປະຊາກອນ, ການສຶກສາ, ການຈ້າງງານ ແລະ ສຸຂະພາບ.(https://www.un.org/en/global-issues/youth )

[6] ສະຫະປະຊາຊາດໄດ້ນໍາໃຊ້ອາຍຸຕາມລໍາດັບ ເພື່ອກໍານົດກຸ່ມອາຍຸ, ໂດຍປົກກະຕິໄດ້ກໍານົດ "ຜູ້ສູງອາຍຸ" ແມ່ນມີອາຍຸ 60 ຫຼື 65 ປີຂຶ້ນໄປ (UN DESA, 2020). (https://www.migrationdataportal.org/themes/older-persons-and-migration)

**ການກະກຽມ:**

- ຖ້າຈຳເປັນ, ຕ້ອງໄດ້ຂໍການອະນຸມັດຢ່າງເປັນທາງການ ເພື່ອດຳເນີນການສົນທະນາຢູ່ພາຍໃນບ້ານ/ຊຸມຊົນ.
- ກຳນົດສະຖານທີ່ທີ່ສະດວກສຳລັບການສົນທະນາ (ຫ້ອງການບ້ານ / ສູນຊຸມຊົນ). ໂດຍພິຈາລະນາ: ການຈັດເພື່ອຮັບປະກັນວ່າ ເປັນສະ ຖານທີ່ ທີ່ຄຸ້ນເຄີຍ ແລະ ມີຄວາມສະດວກຂອງຜູ້ເຂົ້າຮ່ວມ, ສະຖານທີ່ເຂົ້າເຖິງໄດ້ງ່າຍ, ບໍ່ມີສຽງລົບກວນຢູ່ພາຍໃນ ແລະ ອ້ອມຂ້າງສະຖານທີ່, ມີຈຳນວນບ່ອນນັ່ງທີ່ພຽງພໍ.
- ໃຫ້ແນ່ໃຈວ່າຜູ້ເຂົ້າຮ່ວມຮູ້ເວລານັດ ແລະ ສະຖານທີ່ຂອງການສົນທະນາກຸ່ມ.

**ໃນຊ່ວງລະຫວ່າງການສົນທະນາກຸ່ມ:**

- ໃຫ້ຜູ້ອຳນວຍຄວາມສະດວກ ແລະ ສະມາຊິກຢູ່ໃນກຸ່ມສົນທະນາ ແນະນຳຕົນເອງ.
- ອະທິບາຍໃຫ້ຜູ້ເຂົ້າຮ່ວມຮັບຮູ້ ກ່ຽວກັບພາບລວມ ແລະ ຈຸດປະສົງ ຂອງແບບສອບຖາມ ແລະ ການສົນທະນາກຸ່ມ. ພ້ອມທັງອະທິບາຍກ່ຽວກັບຜົນປະໂຫຍດຈາກການມີສ່ວນຮ່ວມ ທີ່ຜູ້ຊົມໃຊ້ທີ່ດິນ ແລະ ສະມາຊິກແຕ່ລະຄົນຢູ່ໃນກຸ່ມ ຈະໄດ້ຮັບຈາກການສົນທະນາກຸ່ມ. ການວາງແຜນ, ການອອກແບບ ແລະ ການຈັດຕັ້ງປະຕິບັດໂຄງການໃໝ່ ທີ່ສາມາດເຮັດໃຫ້ການຕອບສະໜອງດ້ານວຽກງານບົດບາດຍິງ-ຊາຍ ໄດ້ຫຼາຍຂຶ້ນ ໂດຍການກຳນົດຂໍ້ຫຍຸ້ງຍາກທີ່ເປັນອຸປະສັກ ແລະ ຊ່ອງຫວ່າງທີ່ຕ້ອງໄດ້ຮັບການປັບປຸງ ເພື່ອຂະຫຍາຍການຮັບຮອງເອົາເທັກໂນໂລຍີ/ວິທີການ ກ່ຽວກັບ SLM ຂອງເພດຍິງ ແລະ ເພດຊາຍ.
- ເພື່ອຫຼຸດຜ່ອນ ສິ່ງລົບກວນຕ່າງໆ ແລະ ສ້າງໃຫ້ບັນຍາກາດໃນການສົນທະນາໄດ້ດີ ອາດຈະມີການຕົກລົງໃນບາງຫຼັກການຂອງການສົນທະ ນາກຸ່ມ / ບົນພື້ນຖານຄວາມເຄົາລົບເຊິ່ງກັນ ແລະ ກັນ ລະຫວ່າງຜູ້ເຂົ້າຮ່ວມ ແລະ ຜູ້ອຳນວຍຄວາມສະດວກ (ການຍືນຍັນທີ່ຈະເຂົ້າຮ່ວມແຕ່ຕົ້ນຈົນຈົບ, ບໍ່ໃຫ້ໃຊ້ໂທລະສັບ, ບໍ່ໃຫ້ລົບກວນຜູ້ອື່ນ, ...)
- ຕ້ອງໃຫ້ແນ່ໃຈວ່າ ໄດ້ອະທິບາຍກ່ຽວກັບກອບແນວຄວາມຄິດດ້ານວຽກງານບົດບາດຍິງ-ຊາຍ ໃຫ້ທຸກຄົນໄດ້ເຂົ້າໃຈຢ່າງຈະແຈ້ງ.
- ຄວນມີການຫຼິ້ນກິດຈະກຳ ຫຼື ສ້າງບັນຍາກາດກ່ອນດຳເນີນການສົນທະນາກຸ່ມ ໂດຍນຳໃຊ້ຊຸດແບບສອບຖາມ QG. ຖາມຜູ້ເຂົ້າຮ່ວມກ່ຽວກັບ ສອງສິ່ງທີ່ເຂົາເຈົ້າຄິດໄດ້ ກ່ຽວກັບການຕອບສະໜອງດ້ານບົດບາດຍິງ-ຊາຍ ຕໍ່ວຽກງານ SLM.
- ກະກຽມຄຳຖາມ ແລະ ຜູ້ບັນທຶກ/ເຄື່ອງບັນທຶກໃຫ້ພ້ອມ. ອະທິບາຍ ແລະ ຂໍອະນຸຍາດຜູ້ເຂົ້າຮ່ວມໃນກຸ່ມ ກ່ຽວກັບການບັນທຶກການສົນ ທະນາດ້ວຍເຄື່ອງອັດສຽງ (ຖ້າມີ) ຫຼື ການຂໍອະນຸຍາດໃຫ້ຜູ້ບັນທຶກ ເພື່ອບັນທຶກການສົນທະນາ ໂດຍຖາມຄວາມເຫັນດີຈາກຜູ້ເຂົ້າຮ່ວມທຸກຄົນ.
- ຊຸກຍູ້ໃຫ້ຜູ້ເຂົ້າຮ່ວມທັງໝົດ ມີສ່ວນຮ່ວມໃນການສົນທະນາ ແລະ ແຈ້ງໃຫ້ຊາບວ່າ ຫົວຂໍ້ທີ່ຈະຍົກຂຶ້ນມາສົນທະນາພາຍໃນກຸ່ມແມ່ນຈະຖືກເກັບເປັນຄວາມລັບ ຈາກຜູ້ເຂົ້າຮ່ວມທັງໝົດ ແລະ ຜູ້ອຳນວຍຄວາມສະດວກ ເພື່ອໃຫ້ປະຊາຊົນມີຄວາມສະດວກສະບາຍໃນການສະ ແດງຄວາມຄິດຄວາມເຫັນ. ສຳລັບການຮັກສາຂໍ້ມູນສ່ວນຕົວ, ທຸກຂໍ້ມູນທີ່ເກັບກຳແມ່ນຈະບໍ່ມີການກ່າວເຖິງ ຊື່ ຫຼື ຂໍ້ມູນສ່ວນຕົວຂອງຜູ້ເຂົ້າຮ່ວມ ໃນເວລາທີ່ມີການນຳໃຊ້ຂໍ້ມູນເຜີຍແຜ່ຕໍ່ສາທາລະນະ.
- ແຈ້ງໃຫ້ຜູ້ເຂົ້າຮ່ວມກ່ຽວກັບຮູບພາບທີ່ຖ່າຍໃນລະຫວ່າງການສົນທະນາກຸ່ມ ແລະ ການນຳໃຊ້ຮູບພາບຢູ່ໃນຖານຂໍ້ມູນ WOCAT.
- ເພື່ອໃຫ້ໝັ້ນໃນວ່າ ຂໍ້ມູນທີ່ເກັບມາຄົບຖ້ວນ ແລະ ເປັນຂໍ້ມູນທີ່ເຊື່ອຖືໄດ້ ແມ່ນຕ້ອງເປັນຂໍ້ມູນທີ່ອອກມາຈາກຄຳເຫັນຂອງແຕ່ລະຄົນ ແລະ ຕ້ອງໄດ້ຮັບປະກັນເລື່ອງປອດໄພ ແລະ ຄວາມເປັນສ່ວນຕົວ ຂອງຜູ້ທີ່ໃຫ້ຂໍ້ມູນ.
- ຄວນໃຫ້ແນ່ໃຈວ່າ ການສົນທະນາຖືກດຳເນີນໄປດ້ວຍລາບລື່ນ ມີຄວາມຊັດເຈນ, ບໍ່ມີສິ່ງລົບກວນ ຫຼື ຂໍ້ຂັດແຍ່ງພາຍໃນກຸ່ມສົນທະນາ.
- ຄວນມີການປິດ ຫຼື ລົງທ້າຍແຕ່ລະຫົວຂໍ້ສົນທະນາ ໂດຍການສະຫຼຸບໃຈຄວາມສັ້ນໆ, ຖາມກ່ຽວກັບເອົາຄວາມເຫັນດີເຫັນພ້ອມກ່ຽວກັບບົດສະຫຼຸບ ແລ້ວຈຶ່ງຍ້າຍໄປຫົວຂໍ້ຕໍ່ໄປ.
- ຄວນໃຫ້ແນ່ໃຈວ່າທຸກຄຳຖາມ ຂອງການສົນທະນາໄດ້ ແມ່ນໄດ້ຄຳຕອບ ຈາກກຸ່ມສົນທະນາ ຫຼື ຜູ້ອຳນວຍຄວາມສະດວກ ຫຼື ທຸກຄຳຕອບແມ່ນໄດ້ມີການບັນທຶກໄວ້ ເພື່ອການຕິດຕາມຄືນ.
- ຖ້າມີຄວາມຈຳເປັນ ກໍ່ສາມາດນຳໃຊ້ກະດານບັນທຶກ ຫຼື ວິທີອື່ນ ເພື່ອບັນທຶກເປັນເດັ່ນສຳຄັນຂອງການສົນທະນາ ແລະ ໃຫ້ຜູ້ເຂົ້າຮ່ວມສາ ມາດເບິ່ງເຫັນ ແລະ ອ້າງອີງຢູ່ຊ່ວງຂອງການສົນທະນາ. ພ້ອມດຽວກັນນີ້ ກໍ່ສາມາດສ້າງ ແລະ ນຳໃຊ້ ຂໍ້ມູນຮູບພາບ / ສັນຍາລັກຕ່າງໆ ເພື່ອຊ່ວຍໃຫ້ການເກັບກຳຂໍ້ມູນໄດ້ໄວຂຶ້ນ.

— ຄວນວາງຕົວໃຫ້ເປັນກາງ ແລະ ບໍ່ຕັດສິນ ແລະ ເຕືອນຜູ້ເຂົ້າຮ່ວມ ໃນເວລາການສົນທະນາບໍ່ໄປຈຸດປະສົງທີ່ວາງໄວ້, ເຊິ່ງອາດຈະມີຜູ້ເຂົ້າຮ່ວມບາງທ່ານ ທີ່ບໍ່ເຫັນດີຕໍ່ຈຸດປະສົງ ກໍບໍ່ເປັນຫຍັງ.
— ຈະຖືວ່າບໍ່ມີຄຳຕອບໃດ ທີ່ຖືກ ຫຼື ຜິດ; ຂໍພຽງແຕ່ໃຫ້ທຳຄວາມເຂົ້າໃຈ ປະສົບການ ແລະ ຄວາມຄິດເຫັນທີ່ແຕກຕ່າງກັນຂອງຜູ້ເຂົ້າຮ່ວມຢູ່ກຸ່ມສົນທະນາກຸ່ມ.
ຄວນໃຫ້ຄວາມເຄົາລົບສິດໃນການສະແດງຄວາມຄິດເຫັນ ຂອງເຂົາເຈົ້າ.
— ຄວນລະວັງກ່ຽວກັບຄວາມບໍ່ຍຸດຕິທຳ ທີ່ອາດສົ່ງຜົນກະທົບຕໍ່ການສົນທະນາກຸ່ມ, ຕົວຢ່າງເຊັ່ນ: ການຄວບຄຸມໃດໜຶ່ງ ທີ່ເຮັດໃຫ້ບາງຄົນບໍ່ກ້າສະແດງຄວາມຄິດເຫັນອອກມາ (ມີແຕ່ບຸກຄົນທີ່ມີອຳນາດ ທີ່ໄດ້ສະແດງຄວາມຄິດເຫັນຢູ່ໃນການສົນທະນາ) ຫຼື ການຄົ້ນຄິດຄຳຕອບເປັນກຸ່ມ (ສະມາຊິກໃນກຸ່ມມີແນວໂນ້ມທີ່ຈະຄິດຄ້າຍຄືກັນ ຫຼື ນຳຕາມຄວາມເຫັນສ່ວນໃຫຍ່ ເພື່ອຮັກສາຄວາມສາມັກຄີຂອງສະມາຊິກຢູ່ພາຍໃນກຸ່ມ).
ຄວນອະນຸຍາດໃຫ້ສະມາຊິກທັງໝົດຂອງກຸ່ມໄດ້ມີໂອກາດເວົ້າ, ຮັບຟັງ ແລະ ຕອບໂຕ້ຕໍ່ຄຳຄິດເຫັນຕ່າງໆ, ການໂຕ້ຖຽງຈະຕ້ອງໃຫ້ມີເນື້ອໃນ ທີ່ບໍ່ແມ່ນການໂຕ້ຖຽງກ່ຽວກັບສ່ວນບຸກຄົນ ແລະ ອື່ນໆ.
— ໃນຕອນທ້າຍຕ້ອງໄດ້ສະຫຼຸບສັ້ນໆ ກ່ຽວກັບປະເດັນທີ່ໄດ້ສົນທະນາກັນ, ເປີດໂອກາດໃຫ້ຜູ້ເຂົ້າຮ່ວມໄດ້ມີຄຳຄິດຄຳເຫັນເພີ່ມເຕີມ / ໃຫ້ຄຳແນະນຳກ່ຽວກັບປະເດັນທີ່ຍັງບໍ່ຄົບຖ້ວນ, ອະທິບາຍຂັ້ນຕອນການຕິດຕາມ, ປະເມີນຜົນການສົນທະນາກຸ່ມ ແລະ ສຸດທ້າຍ ກໍກ່າວຄຳຂອບຂອບໃຈຕໍ່ຜູ້ເຂົ້າຮ່ວມ ແລະ ປິດກອງປະຊຸມການສົນທະນາກຸ່ມ.

## 4.4 ໄລຍະເວລາ ແລະ ການຈັບເວລາ

**ການກະກຽມ** ສຳລັບການຕື່ມຂໍ້ມູນໃສ່ໃນແບບສອບຖາມ QG ແລະ ການຈັດການສົນທະນາກຸ່ມ ຂຶ້ນກັບສະພາບການ ແລະ ເງື່ອນໄຂຕ່າງໆເຊັ່ນ: ຄວາມຄຸ້ນເຄີຍ ແລະ ປະສົບການຜ່ານມາຂອງຜູ້ສັງລວມຂໍ້ມູນ / ຜູ້ອຳນວຍຄວາມສະດວກ ກ່ຽວກັບການນຳໃຊ້ແບບສອບຖາມ WOCAT, ການມີຜູ້ຊ່ວຍຈາກພາຍນອກ ແລະ ຜູ້ໃຫ້ຂໍ້ມູນຫຼັກ ລວມໄປເຖິງປະສົບການທີ່ຜ່ານມາ ໃນການຈັດສົນທະນາກຸ່ມ.

ໄລຍະເວລາທີ່ແນະນຳ ໃນການຈັດກຸ່ມສົນທະນາ ປະມານ 3-4 ຊົ່ວໂມງ. ຖ້າສະມາຊິກໃນກຸ່ມໃຫ້ຄວາມສົນໃຈຫຼາຍ ສາມາດຂະຫຍາຍເວລາໃນການສົນທະນາ. ເຖິງຢ່າງໃດກໍຕາມ, ເວລາກໍອາດຈະບໍ່ພຽງພໍ ທີ່ຈະປຶກສາຫາລືໃຫ້ຄົບທຸກປະເດັນບັນຫາທີ່ຖືກຍົກຂຶ້ນມາ. ແຕ່ຖ້າຫາກວ່າ ຜູ້ເຂົ້າຮ່ວມມີຄວາມເຕັມໃຈ ແລະ ມີຄວາມພ້ອມ, ກໍສາມາດຈັກການສົນທະນາ ຕໍ່ຮອບທີ 2 ໄດ້. ແນະນຳໃຫ້ກຸ່ມສົນທະນາພັກຜ່ອນກ່ອນ ຈະເຂົ້າສູ່ບົດແນະນຳ (ພາກທີ 6) ເພື່ອໃຫ້ຜູ້ອຳນວຍຄວາມສະດວກໄດ້ມີເວລາໃນການທົບທວນຄືນຄຳຕອບ ແລະ ກະກຽມຄວາມພ້ອມສຳລັບການດຳ ເນີນພາກທີ່ສຳຄັນຕໍ່ໄປ ແລະ ພາກສຸດທ້າຍ. ຖ້າຫາກສະຖານະການເອື້ອອຳນວຍ ກໍສາມາດເລືອກດຳເນີນການສົນທະນາສຳລັບ ພາກທີ 6 ຢູ່ມື້ຕໍ່ມາໄດ້. ທັງນີ້ກໍເພື່ອຊ່ວຍໃຫ້ຜູ້ອຳນວຍຄວາມສະດວກໄດ້ມີເວລາຫຼາຍຂຶ້ນ ໃນການກະກຽມສຳລັບການດຳເນີນພາກນີ້ນຳອີກ. ນອກຈາກນັ້ນ, ກໍຍັງສາ ມາດແບ່ງການສົນທະນາກຸ່ມ ອອກເປັນສອງສ່ວນສັ້ນໆ ເຊິ່ງຜູ້ເຂົ້າຮ່ວມສ່ວນໃຫຍ່ຈະມັກຮູບແບບນີ້.

ການກຳນົດເວລາຂອງການສົນທະນາກຸ່ມ ໃນກໍລະນີທີ່ຜູ້ນຳໃຊ້ທີ່ດິນບໍ່ຄາວຽກຫຼາຍ, ເຊິ່ງຈຸດນີ້ຄວນພິຈາລະນາແຍກກັນລະຫວ່າງຜູ້ເຂົ້າຮ່ວມຍິງ ແລະ ຊາຍ ເປັນແຕ່ລະອັນໄປ ແລະ ຄວນສະເໜີໃຫ້ມີສະຖານທີ່ເບິ່ງແຍງເດັກນ້ອຍ ເພື່ອອຳນວຍຄວາມສະດວກໃນການມີສ່ວນຮ່ວມຂອງແມ່ຍິງ ແລະ ຜູ້ຊາຍ ມີຄວາມເທົ່າທຽມກັນ ຢູ່ແຕ່ລະກຸ່ມສົນທະນາ.

**ພາບລວມຂອງການຄາດຄະເນເວລາທີ່ນຳໃຊ້ ສຳລັບການກະກຽມຂໍ້ມູນ QG ຈາກ ແຫຼ່ງຂໍ້ມູນພາຍນອກ, ຜູ້ໃຫ້ຂໍ້ມູນຫຼັກ ແລະ ຈາກການດຳເນີນການສົນທະນາເປັນກຸ່ມ:**

| ຫົວຂໍ້ | ໄລຍະເວລາ |
|---|---|
| 1. ການກຽມຄວາມພ້ອມ (ສຳລັບອົງກອນ) | 4-8 ຊົ່ວໂມງ |
| 2. ການກຽມຄວາມພ້ອມ (ທຳຄວາມເຂົ້າໃຈກັບແບບສອບຖາມ QG) | 4-8 ຊົ່ວໂມງ |
| 3. ຖ້າມີຄວາມສະດວກ, ຄວນສຶກສາເທັກໂນໂລຢີ ແລະ ວິທີການຕ່າງໆ ຢູ່ໃນຖານຂໍ້ມູນ WOCAT | 5 ຊົ່ວໂມງ |
| 4. ທົບທວນຄືນ ຂໍ້ມູນຈາກແຫຼ່ງຂໍ້ມູນພາຍນອກທີ່ມີຢູ່ | 5 ຊົ່ວໂມງ |
| 5. ກຳນົດ ແລະ ສຳພາດ ຜູ້ໃຫ້ຂໍ້ມູນຫຼັກ | 5 ຊົ່ວໂມງ |

| | |
|---|---|
| 6. ການອຳນວຍຄວາມສະດວກ ໃນການສົນທະນາເປັນກຸ່ມ | > 3.5[7] ຊົ່ວໂມງ |
| — ແນະນຳຜູ້ເຂົ້າຮ່ວມ ແລະ ກ່າວຕ້ອນຮັບ | 15 ນາທີ |
| — ສະເໜີຄວາມເປັນມາຂອງໂຄງການ ແລະ ຈຸດປະສົງຂອງການສົນທະນາກຸ່ມ | 15 ນາທີ |
| — ວາງລະບຽບ ແລະ ຕັ້ງຄຳຖາມ ເພື່ອເປີດປະເດັນສົນທະນາ | 15 ນາທີ |
| — ເກັບກຳຂໍ້ມູນ ສຳລັບບົດທີ 2 ຂອງແບບສອບຖາມ QG | 15 ນາທີ |
| — ເກັບກຳຂໍ້ມູນ ສຳລັບບົດທີ 3 ຂອງແບບສອບຖາມ QG | 15 ນາທີ |
| — ເກັບກຳຂໍ້ມູນ ສຳລັບບົດທີ 4 ຂອງແບບສອບຖາມ QG | 45 ນາທີ |
| — ເກັບກຳຂໍ້ມູນ ສຳລັບບົດທີ 5 ຂອງແບບສອບຖາມ QG | 45 ນາທີ |
| — ເກັບກຳຂໍ້ມູນ ສຳລັບບົດທີ 6 ຂອງແບບສອບຖາມ QG | 45 ນາທີ |
| — ທິດທາງໃນຕໍ່ໜ້າ, ຈະມີການລາຍງານຜົນໄດ້ຮັບກັບຄືນຄືແນວໃດ, ວິທີການຈັດຕັ້ງປະຕິບັດໄດ້ແນວໃດ | 15 ນາທີ |
| **7.** ການບັນທຶກຂໍ້ມູນ ລົງໃນຖານຂໍ້ມູນ | 4-5 ຊົ່ວໂມງ |
| **ລວມທັງໝົດ** | **~ 40 ຊົ່ວໂມງ** |

## 5 ປະເດັນດ້ານຈັນຍາທຳ

ຜູ້ສັງລວມຂໍ້ມູນ / ຜູ້ອຳນວຍຄວາມສະດວກ ຕ້ອງຮັບປະກັນໃນການປົກປ້ອງຄວາມຊື່ສັດສຸຈະລິດຂອງຜູ້ເຂົ້າຮ່ວມ. ການເຂົ້າຮ່ວມໃນການສົນທະນາຄວນຈະຕ້ອງບໍ່ມີອັນຕະລາຍໃດໆ ຕໍ່ຜູ້ເຂົ້າຮ່ວມ ລວມຈົນເຖິງຜູ້ສັງລວມຂໍ້ມູນ / ຜູ້ອຳນວຍຄວາມສະດວກ ຫຼື ບຸກຄົນທີ່ສາມຈາກພາຍນອກທີ່ກ່ຽວຂ້ອງ (ຄອບຄົວ, ພີ່ນ້ອງ, ເພື່ອນບ້ານ, ໝູ່ເພື່ອນ).

ຂໍ້ມູນທີ່ຈະຖືກບັນທຶກໄວ້, ປ້ອນເຂົ້າໄປ ແລະ ເກັບຮັກສາໄວ້ໃນຖານຂໍ້ມູນ WOCAT ແມ່ນ:

— ຂໍ້ມູນສາມາດເຂົ້າເຖິງໄດ້ ໂດຍບໍ່ມີຄ່າໃຊ້ຈ່າຍ.

— ສ້າງຂຶ້ນສຳລັບຜູ້ໃຊ້ ພາຍໃຕ້ ສັນຍາສາກົນ ໃນການສ້າງແຫຼ່ງຂໍ້ມູນຮ່ວມກັນ - ໂດຍບໍ່ມີຈຸດປະສົງດ້ານການຄ້າ - ສາມາດເຜີຍແຜ່ໄດ້ ໂດຍບໍ່ມີການຊື້ລິຂະສິດ (Creative Commons Attribution-NonCommercial-ShareAlike 4.0 International Unported License).

— ລາຍຊື່ຜູ້ເຂົ້າຮ່ວມຈະບໍ່ຖືກເຜີຍແຜ່ ໄປສູ່ພາຍນອກຖານຂໍ້ມູນ.

— ຜູ້ເຂົ້າຮ່ວມໃນກອງປະຊຸມ ຫຼື ການສົນທະນາ ຈະບໍ່ຖືກເປີດເຜີຍ ຊື່ ຫຼື ມີຮູບແບບທີ່ບໍ່ສາມາດຕິດຕາມກັບຄືນຫາຜູ້ໃຫ້ຂໍ້ມູນໄດ້.

ບັນຫາຄວາມປອດໄພ ແລະ ຄວາມເປັນສ່ວນຕົວ ແມ່ນຖືກຄຸ້ມຄອງໂດຍຜ່ານການກວດສອບທາງດ້ານຈັນຍາບັນ ແລະ ການການຍິນຍອມເຫັນດີທີ່ຊີ້ແຈ້ງໃຫ້ຮັບຮູ້ (ລວມຢູ່ໃນແບບສອບຖາມ QG) ທັງນີ້ກໍເພື່ອຮັບປະກັນວ່າຜູ້ເຂົ້າຮ່ວມແຕ່ລະຄົນແມ່ນໄດ້ຮັບການຕົກລົງຍິນຍອມດ້ວຍການແຈ້ງໃຫ້ຊາບດ້ວຍຄຳເວົ້າກ່ອນແລ້ວ (ຫຼື ຖ້າຕ້ອງການຄວາມຍິນຍອມເປັນລາຍລັກອັກສອນ, ແມ່ນໃຫ້ຜູ້ເຂົ້າຮ່ວມລົງລາຍເຊັນຢູ່ໃນໃບລົງທະບຽນຜູ້ເຂົ້າຮ່ວມ)

## 6 ຄຸນນະພາບຂອງຂໍ້ມູນ ແລະ ການເຜີຍແຜ່ຜົນໄດ້ຮັບ

ຈະຕ້ອງໄດ້ມີການທົບທວນຄືນ ເພື່ອປະເມີນ ແລະ ກວດສອບ ຄຸນນະພາບຂອງຂໍ້ມູນທີ່ສັງລວມມາໃຫ້ມີຄວາມໜ້າເຊື່ອຖື. ຂະບວນການທົບທວນນີ້ແມ່ນສາມາດຍືດຫຍຸ່ນໄດ້ ເຊິ່ງໄດ້ກຳນົດໄວ້ຢູ່ໃນ WOCAT ພາຍໃຕ້ຫົວຂໍ້ ການຮ່ວມມືຂອງຜູ້ສັງລວມຂໍ້ມູນ.

ຂໍ້ມູນຈາກການສົນທະນາກຸ່ມ ແມ່ນຈະມີເຜີຍແຜ່ສູ່ສາທາລະນະ ຢູ່ໃນຖານຂໍ້ມູນ WOCAT. ເຊິ່ງສາມາດດາວໂຫຼດ ຮູບແບບ ແລະ ວິ ທີການນຳໃຊ້ ທີ່ສະໜອງໃຫ້ຢູ່ຊຸມຊົນ ແລະ ເຄືອຂ່າຍ ທີ່ກ່ຽວຂ້ອງ.

ຜູ້ສັງລວມຂໍ້ມູນ / ຜູ້ອຳນວຍຄວາມສະດວກ ແລະ ຜູ້ໃຫ້ຂໍ້ມູນຫຼັກ ຄວນສະທ້ອນໃຫ້ຊຸມຊົນຮູ້ກ່ຽວກັບວິທີການເຜີຍແຜ່ຜົນໄດ້ຮັບຈາກແບບສອບຖາມ QG ພາຍຫຼັງການວິເຄາະຂໍ້ມູນສຳເລັດ.

[7] Time of group discussion should be kept flexible to fit the local context and pace of the meeting

ເອື່ງໃນນີ້ກໍ່ມີຄວາມເປັນໄປໄດ້ທີ່ຈະຈັດກອງປະຊຸມເຜີຍແຜ່ຜົນໄດ້ຮັບໂດຍຫຍໍ້ ໃຫ້ແກ່ຊຸມຊົນ ເພື່ອເປັນການແບ່ງປັນຂໍ້ມູນທີ່ໄດ້ຮັບ.

# ພາກທີ 2: ແບບສອບຖາມ ກ່ຽວກັບບົດບາດຍິງ-ຊາຍ ຕໍ່ວຽກງານການຄຸ້ມຄອງທີ່ດິນແບບຍືນຍົງ (SLM)

## 1 ຂໍ້ມູນທົ່ວໄປ

### 1.1 ຊື່ຂອງຊຸມຊົນ (ສະຫະກອນ, ກຸ່ມຜູ້ຊົມໃຊ້, ກຸ່ມຊົນເຜົ່າ) ທີ່ໄດ້ນຳໃຊ້ ຫຼື ກຳລັງນຳໃຊ້ເຕັກໂນໂລຍີ/ວິທີການ

..................................................................................................................................................................

..................................................................................................................................................................

### 1.2 ຂໍ້ມູນການຕິດຕໍ່ ຂອງຜູ້ເກັບກຳຂໍ້ມູນ ທີ່ມີສ່ວນກ່ຽວຂ້ອງໃນການປະເມີນ ໃນແບບສອບຖາມ QG

ຂໍ້ມູນຜູ້ສັງລວມຂໍ້ມູນ

*ບຸກຄົນນີ້ ຈະເປັນຜູ້ລວບລວມຂໍ້ມູນ ແລະ ດຳເນີນການສຳພາດກັບຜູ້ໃຫ້ຂໍ້ມູນຫຼັກ. ພວກເຂົາຈະໄດ້ສ້າງແບບຟອມໃໝ່ກ່ຽວກັບບົດບາດຍິງ-ຊາຍ ຕໍ່ວຽກງານ **SLM** ລົງໃນຖານຂໍ້ມູນ **WOCAT SLM**, ເພື່ອເປັນບ່ອນທີ່ ຈະໄດ້ປ້ອນຂໍ້ມູນຈາກແບບສອບຖາມລົງໃສ່. ບຸກຄົນນີ້ກໍ່ຍັງສາ ມາດເຮັດໜ້າທີ່ ເປັນຜູ້ອຳນວຍຄວາມສະດວກໃຫ້ແກ່ການສົນທະນາກຸ່ມ ຫຼື ກຳນົດ ໜຶ່ງຄົນ ຫຼື ຫຼາຍຄົນ ເພື່ອມາເປັນຜູ້ອຳນວຍຄວາມສະດວກ ແລະ ດຳເນີນການສົນທະນາ.*

*❍ ເລືອກໄດ້ຄຳຕອບດຽວ*

| ນາມສະກຸນ | ຊື່ແທ້ | ຕຳແໜ່ງການຈັດຕັ້ງ | ເພດ | ວັດທະນະທຳ ຫຼື ເອກະລັກ/ຊົນຊັ້ນ/ຊົນເຜົ່າ/ກຸ່ມຊົນເຜົ່າ | ອາຍຸ | ສັນຊາດ | ອີເມວ (E-mail) | ເບີໂທລະສັບ (+ລະຫັດປະເທດ) |
|---|---|---|---|---|---|---|---|---|
| | | | ❍ ເພດຍິງ<br>❍ ເພດຊາຍ<br>❍ ອື່ນໆ (ລະບຸ) ................ | | | | | |

ຂໍ້ມູນພາກສ່ວນຜູ້ໃຫ້ຂໍ້ມູນ, ຜູ້ສະໜອງຂໍ້ມູນໃຫ້

*ຈະເປັນບຸກຄົນຈາກໜ່ວຍງານບໍລິຫານຂັ້ນຕໍ່າສຸດໃນຊຸມຊົນ (ປະທານເຂດ, ປະທານຊຸມຊົນ, ນາຍບ້ານ) ຫຼື ຜູ້ທີ່ຮູ້ຈັກດີກ່ຽວກັບຊຸມຊົນ ບ່ອນນຳໃຊ້ນຳໃຊ້ເຕັກໂນໂລຊີ. ຂໍ້ມູນນີ້ຈະມີຢູ່ໃນ ຂໍ້ມູນລົງທະບຽນສຳລັບຜູ້ໃຊ້ **WOCAT**. ຖ້າຜູ້ໃຫ້ຂໍ້ມູນຫຼັກບໍ່ຕ້ອງການແບ່ງປັນຂໍ້ມູນສ່ວນຕົວຂອງເຂົາເຈົ້າ, ເຂົາເຈົ້າສາມາດປະເປັນວ່າງເປົ່າໄວ້ ບ່ອນຫ້ອງ ອາຍຸ, ສັນຊາດ, ອີເມວ ແລະ ເບີໂທລະສັບ.*

*❍ ເລືອກໄດ້ຄຳຕອບດຽວ*

| ນາມສະກຸນ | ຊື່ແທ້ | ຕຳແໜ່ງການຈັດຕັ້ງ | ເພດ | ວັດທະນະທຳ ຫຼື ເອກະລັກ/ຊົນຊັ້ນ/ຊົນເຜົ່າ/ກຸ່ມຊົນເຜົ່າຍ່ອຍ | ອາຍຸ | ສັນຊາດ | ອີເມວ (E-mail) | ເບີໂທລະສັບ (+ລະຫັດປະເທດ) |
|---|---|---|---|---|---|---|---|---|
| | | | ❍ ເພດຍິງ<br>❍ ເພດຊາຍ | | | | | |

| | | | | | | | | |
|---|---|---|---|---|---|---|---|---|
| | | | ❍ ອື່ນໆ (ລະບຸ) ................ | | | | | |
| | | | ❍ ເພດຍິງ ❍ ເພດຊາຍ ❍ ອື່ນໆ (ລະບຸ) ................ | | | | | |
| | | | | | | | | |

## 1.3 ຂໍ້ມູນ, ການນຳໃຊ້ ແລະ ແຫຼ່ງຂໍ້ມູນ

*ສ່ວນຫນຶ່ງຂອງຂໍ້ມູນ ແລະ ຂໍ້ມູນທີ່ສາມາດເກັບກຳ ແລະ ສັງລວມໄດ້ຈາກແຫຼ່ງຕ່າງໆທີ່ມີຢູ່ເຊັ່ນ: ຂໍ້ມູນແຫ່ງຊາດ, ໂຄງການທີ່ຈັດຕັ້ງປະ ຕິບັດຜ່ານມາ, ບົດລາຍງານ, ຖານຂໍ້ມູນທີ່ກ່ຽວຂ້ອງ ແລະ ອື່ນໆ.*

| **ປະເພດຂໍ້ມູນ / ແຫຼ່ງຂໍ້ມູນ** | ***ບ່ອນອ້າງອີງ*** | ໝາຍເຫດ |
|---|---|---|
| | | |
| | | |
| | | |
| | | |

## 1.4 ເງື່ອນໄຂ ກ່ຽວກັບການນຳໃຊ້ຂໍ້ມູນ ທີ່ບັນທຶກໄວ້ໃນຖານຂໍ້ມູນ WOCAT

ຜູ້ສັງລວມຂໍ້ມູນ, ຜູ້ອຳນວຍຄວາມສະດວກ, ຜູ້ໃຫ້ຂໍ້ມູນຫຼັກ ແລະ ສະມາຊິກກຸ່ມສົນທະນາ ຍອມຮັບເງື່ອນໄຂກ່ຽວກັບການນຳໃຊ້ຂໍ້ມູນທີ່ບັນທຶກໄວ້ໃນຖານຂໍ້ມູນ WOCAT:

❍ ຍອມຮັບ ❍ ບໍ່ຍອມຮັບ

*ໝາຍເຫດ: ຖ້າທ່ານບໍ່ຍອມຮັບເງື່ອນໄຂ, ທ່ານຈະບໍ່ສາມາດເຂົ້າຮ່ວມໃນການສົນທະນາກຸ່ມ ແລະ ການຕື່ມຂອງມູນຂອງທ່ານຈະບໍ່ຖືກບັນທຶກລົງໃນຖານຂໍ້ມູນ WOCAT.*

***ເງື່ອນໄຂກ່ຽວກັບການນຳໃຊ້ຂໍ້ມູນທີ່ບັນທຶກໄວ້ໃນຖານຂໍ້ມູນ WOCAT***

- *ຂໍ້ມູນທີ່ຖືກບັນທຶກຜ່ານແບບສອບຖາມ WOCAT ຈະຖືກປ້ອນ, ແກ້ໄຂ ແລະ ຈັດເກັບໄວ້ໃນຖານຂໍ້ມູນອອນໄລນ໌ WOCAT ໂດຍຜູ້ສັງລວມຂໍ້ມູນ ຫຼື ຜູ້ປ້ອນຂໍ້ມູນ (ຜູ້ອຳນວຍຄວາມສະດວກ) ທີ່ຖືກມອບໝາຍ ຈາກຜູ້ສັງລວມຂໍ້ມູນ. ເຊີ່ງຊື່ຂອງທ່ານຈະຖືກບັນທຶກໄວ້ ແລະ ເປັນລິຂະສິດຂອງທ່ານ ຢູ່ໃນຖານຂໍ້ມູນ ຫຼື ສິ່ງພິມ ທີ່ມີການນຳໃຊ້ການບັນທຶກຂໍ້ມູນຜ່ານເທັກໂນໂລຢີດ້ານເອກະສານ. ຄວາມຮັບຜິດຊອບໂດຍລວມ ສຳລັບການສັງລວມຂໍ້ມູນ ແລະ ຄຸນນະພາບຂອງຂໍ້ມູນ ແມ່ນຈະຂຶ້ນກັບຜູ້ສັງລວມຂໍ້ມູນ.*
- *ຂໍ້ມູນທີ່ເກັບໄວ້ໃນຖານຂໍ້ມູນ WOCAT ແມ່ນສາມາດເຂົ້າເຖິງໄດ້ ໂດຍບໍ່ມີຄ່າໃຊ້ຈ່າຍ.*
- *ຖານຂໍ້ມູນຖືກສ້າງຂຶ້ນ ສຳລັບຜູ້ຊົມໃຊ້ ພາຍໃຕ້ ສັນຍາສາກົນ ໃນການສ້າງແຫຼ່ງຂໍ້ມູນຮ່ວມກັນ - ໂດຍບໍ່ ມີຈຸດປະສົງດ້ານການຄ້າ - ສາມາດເຜີຍແຜ່ໄດ້ ໂດຍບໍ່ມີການຊື້ລິຂະສິດ (Creative Commons Attribution-NonCommercial-ShareAlike 4.0 International Unported License).*

***ເງື່ອນໄຂກ່ຽວກັບການນຳໃຊ້ຂໍ້ມູນທີ່ບັນທຶກໄວ້ໃນຖານຂໍ້ມູນ WOCAT***

- *ຂໍ້ມູນທີ່ຖືກບັນທຶກຜ່ານແບບສອບຖາມ WOCAT ຈະຖືກປ້ອນ, ແກ້ໄຂ ແລະ ຈັດເກັບໄວ້ໃນຖານຂໍ້ມູນອອນໄລນ໌ WOCAT ໂດຍຜູ້ສັງລວມຂໍ້ມູນ ຫຼື ຜູ້ປ້ອນຂໍ້ມູນ (ຜູ້ອຳນວຍຄວາມສະດວກ) ທີ່ຖືກມອບໝາຍ ຈາກຜູ້ສັງລວມຂໍ້ມູນ. ເຊີ່ງຊື່ຂອງທ່ານຈະຖືກບັນທຶກໄວ້ ແລະ ເປັນລິຂະສິດຂອງທ່ານ ຢູ່ໃນຖານຂໍ້ມູນ ຫຼື ສິ່ງພິມ ທີ່ມີການນຳໃຊ້ການບັນທຶກຂໍ້ມູນຜ່ານເທັກໂນໂລຢີດ້ານເອກະສານ. ຄວາມຮັບຜິດຊອບໂດຍລວມ ສຳລັບການສັງລວມຂໍ້ມູນ ແລະ ຄຸນນະພາບຂອງຂໍ້ມູນ ແມ່ນຈະຂຶ້ນກັບຜູ້ສັງລວມຂໍ້ມູນ.*
- *ຂໍ້ມູນທີ່ເກັບໄວ້ໃນຖານຂໍ້ມູນ WOCAT ແມ່ນສາມາດເຂົ້າເຖິງໄດ້ ໂດຍບໍ່ມີຄ່າໃຊ້ຈ່າຍ.*
- *ຖານຂໍ້ມູນຖືກສ້າງຂຶ້ນ ສຳລັບຜູ້ຊົມໃຊ້ ພາຍໃຕ້ ສັນຍາສາກົນ ໃນການສ້າງແຫຼ່ງຂໍ້ມູນຮ່ວມກັນ - ໂດຍບໍ່ ມີຈຸດປະສົງດ້ານການຄ້າ - ສາມາດເຜີຍແຜ່ໄດ້ ໂດຍບໍ່ມີການຊື້ລິຂະສິດ (Creative Commons Attribution-NonCommercial-ShareAlike 4.0 International Unported License).*

***ທ່ານຍອມຮັບທີ່ຈະ:***

- ***ແບ່ງປັນ*** *— ສຳເນົາ ແລະ ເຜີຍແຜ່ຂໍ້ມູນ ຜ່ານສື່ ຫຼື ຮູບແບບໃດໜຶ່ງ*
- ***ດັດປັບ*** *— ປະສົມປະສານ, ປ່ຽນແປງ ແລະ ສ້າງຂໍ້ມູນຂຶ້ນມາໃໝ່ ໂດຍນຳໃຊ້ເນື້ອໃນຢູ່ໃນຖານຂໍ້ມູນນີ້*

***ຜູ້ອອກໃບອະນຸຍາດ ບໍ່ສາມາດຖອນສິດເຫຼົ່ານີ້ໄດ້ ຖ້າຫາກທ່ານປະຕິບັດຕາມເງື່ອນໄຂຂອງ ໃບອະນຸຍາດ:***

- ***ແຫຼ່ງທີ່ມາຂອງຂໍ້ມູນ*** *— ທ່ານຕ້ອງໃຫ້ລິຂະສິດ ຢ່າງເໝາະສົມ, ສະໜອງຄວາມກ່ຽວຂ້ອງກັບໃບອະນຸຍາດ, ແລະ ລະບຸວ່າມີການປ່ຽນແປງ ຫຼື ບໍ່. ທ່ານອາດຈະເຮັດໄດ້ໃນລັກສະນະໃດກໍ່ໄດ້ ທີ່ສົມເຫດສົມຜົນ, ແຕ່ບໍ່ແມ່ນໃນທາງທີ່ແນະນໍາໃຫ້ ຜູ້ອອກໃບອະນຸຍາດ ຮັບຮອງທ່ານ ຫຼື ການນໍາໃຊ້ຂອງທ່ານ.*
- ***ບໍ່ແມ່ນທາງການຄ້າ*** *— ທ່ານບໍ່ສາມາດນໍາໃຊ້ຂໍ້ມູນ ເພື່ອຈຸດປະສົງທາງການຄ້າໄດ້.*
- ***ແບ່ງປັນ ຢ່າງຍຸດຕິທໍາ*** *— ຖ້າຫາກວ່າທ່ານຜະລິດ, ປ່ຽນແປງ ຫຼື ສ້າງເຄື່ອງມືໃໝ່ຂຶ້ນ, ທ່ານຕ້ອງໄດ້ເຜີຍແຜ່ແບ່ງປັນ ເພື່ອເປັນການປະກອບສ່ວນຂອງທ່ານ ຕາມເງື່ອນໄຂຂອງໃບອະນຸຍາດ ທີ່ໄດ້ອອກໃນເບື້ອງຕົ້ນ.*
- ***ບໍ່ມີຂໍ້ຈໍາກັດໃນເພີ່ມເຕີມ*** *— ທ່ານບໍ່ສາມາດນໍາໃຊ້ຂໍ້ກໍານົດທາງກົດໝາຍ ຫຼື ມາດຕະການທາງເທັກໂນໂລຍີ ທີ່ມີການຈໍາກັດທາງກົດໝາຍ ເພື່ອບໍ່ໃຫ້ຜູ້ອື່ນເຮັດອັນໃດອັນໜຶ່ງທີ່ນອກເໜືອຈາກ ທີ່ໃບອະນຸຍາດໄດ້ກໍານົດ.*

*ເງື່ອນໄຂໃນໃບອະນຸຍາດສະບັບ:* ***https://creativecommons.org/licenses/by-nc-sa/4.0/deed.en***

## 2 ຄໍາອະທິບາຍຫຍໍ້ ກ່ຽວກັບ ເທັກໂນໂລຢີ SLM ແລະ ວິທີການທີ່ກ່ຽວຂ້ອງ (ຖ້າມີ)

***ເພື່ອຕື່ມ**ຂໍ້ມູນໃສ່ແບບສອບຖາມຢູ່ໃນພາກນີ້ ໃຫ້ທ່ານອ່ານເພີ່ມເຕີມ ຢູ່ຖານຂໍ້ມູນ **WOCAT** ສໍາລັບເທັກໂນໂລຢີ **SLM** ແລະ ຖ້າມີວິທີການ **SLM** ອື່ນທີ່ກ່ຽວຂ້ອງ ໃຫ້ເບິ່ງວ່າແບບສອບຖາມກ່ຽວກັບເທັກໂນໂລຢີການຕອບສະໜອງດ້ານບົດບາດຍິງ-ຊາຍ ຕໍ່ **SLM** ແນວໃດຂໍ້ມູນຢູ່ໃນວົງເລັບ ຊີ້ບອກເຖິງລໍາດັບຂອງຄໍາຖາມຢູ່ໃນແບບສອບຖາມຂອງເທັກໂນໂລຢີ ແລະ ວິທີການທີ່ກ່ຽວຂ້ອງ. ຖ້າເທັກໂນໂລຢີ ແລະ ວິທີການອື່ນທີ່ກ່ຽວຂ້ອງບໍ່ເຫັນຖືກບັນທຶກໄວ້ໃນຖານຂໍ້ມູນ, ແມ່ນໃຫ້ຕອບຄໍາຖາມ ທີ່ມີຄໍາຕອບທີ່ໄດ້ຈາກການສົນທະນາກຸ່ມ.*

### 2.1 ເທັກໂນໂລຢີ ການຄຸ້ມຄອງທີ່ດິນແບບຍືນຍົງ (SLM Technology)

ຊື່ຂອງເທັກໂນໂລຢີ SLM (ເອົາຈາກ QT ໃນຂໍ້ 1.1)

..............................................................................................................................

ຊື່ທີ່ໃຊ້ໃນທ້ອງຖິ່ນຂອງເທັກໂນໂລຢີ SLM (ເອົາຈາກ QT ໃນຂໍ້ 1.1)

..............................................................................................................................

ລະຫັດປະຈໍາຕົວຂອງ ເທັກໂນໂລຢີ SLM (ຖ້າມີ, ເອົາຈາກ QT ໃນຂໍ້ 1.1)

..............................................................................................................................

ປະເທດ ແລະ ບັນດາປະເທດໃນພາກພື້ນທີ່ເທັກໂນໂລຢີ ແລະ ວິທີການທີ່ກ່ຽວຂ້ອງ (ຖ້າມີ)
ທີ່ໄດ້ຖືກບັນທຶກເປັນເອກະສານໄວ້ (ຖ້າມີ, ເອົາຈາກ QT ໃນຂໍ້ 2.5)

..............................................................................................................................

ບ້ານ, ເມືອງ, ພື້ນທີ່ ແລະ ອື່ນໆ, ບ່ອນທີ່ເທັກໂນໂລຢີ ແລະ ວິທີການທີ່ກ່ຽວຂ້ອງ (ຖ້າມີ) ກໍາລັງຖືກນໍາໃຊ້ຢູ່ (ຖ້າມີ, ເອົາຈາກ QT ໃນຂໍ້ 2.5)

..............................................................................................................................

ຈຸດອ້າງອີງທາງພູມມີສາດ ຫຼື ຈຸດພິກັດ (ຖ້າມີ, ເອົາຈາກ QT ໃນຂໍ້ 2.5):
*ຄ່າພິກັດຕ້ອງເປັນຫົວໜ່ວຍອົງສາ ທົດສະນິຍົມຕາມຮູບແບບຂອງເສັ້ນຂະໜານ ແລະ ເສັ້ນແວງ "Latitude, Longitude" ຕົວຢ່າງ: 46.9526, 7.4352*
ເສັ້ນຂະໜານ: ......................................................................
ເສັ້ນແວງ: ...................................................................................

ວັນທີ/ ຄາດຄະເນວັນທີ່ ທີ່ຈັດຕັ້ງປະຕິບັດ (ຖ້າມີ, ເອົາຈາກ QT ໃນຂໍ້ 2.6):

..............................................................................................................................

ຄໍາອະທິບາຍໂດຍຫຍໍ້ກ່ຽວກັບ ເທັກໂນໂລຢີ (ຖ້າມີ, ເອົາຈາກ QT ໃນຂໍ້ 2.1):

*ໃຫ້ສະຫຼຸບຫຍໍ້ ບົດເທັກໂນໂລຢີ ປະມານ 1-2 ປະໂຫຍກ. ຄວນໃຫ້ແນ່ໃຈວ່າຄໍາອະທິບາຍບົດຫຍໍ້ນີ້
ແມ່ນໃຫ້ມີຄວາມຈັດເຈນ ແລະ ມີຄໍາສັບສໍາຄັນທີ່ກ່ຽວຂ້ອງ ເຊິ່ງມັນເປັນຂໍ້ຄວາມຫຼັກ ຂອງເອກະສານນີ້.*

..............................................................................................................................

..............................................................................................................................

..............................................................................................................................

..............................................................................................................................

## ລາຍລະອຽດກ່ຽວກັບ ເທັກໂນໂລຢີ (ຖ້າມີ, ເອົາຈາກ QT ໃນຂໍ້ 2.2 ແລະ ຫຍໍ້ໃຫ້ເຫຼືອ 1,800 ຕົວອັກສອນ)

*ລາຍລະອຽດ ຄວນໃຫ້ສັ້ນກະທັດຮັດ ແຕ່ກວມເອົາເນື້ອໃນພາບລວມຂອງເທັກໂນໂລຢີ. ດັ່ງນັ້ນ, ຈຶ່ງຄວນຕອບຄໍາຖາມຫຼັກທີ່ສໍາຄັນເຊັ່ນ: (1) ຄຸນລັກສະນະຕົ້ນຕໍ / ອົງປະກອບ ຂອງເທັກໂນໂລຢີແມ່ນຫຍັງ (ລວມທັງຂໍ້ກໍານົດດ້ານວິຊາການ)? (2) ເທັກໂນໂລຢີຖືກນໍາໃຊ້ຢູ່ໃສ (ສະພາບແວດລ້ອມທໍາມະຊາດ ແລະ ມະນຸດ)? (3) ຈຸດປະສົງ/ໜ້າທີ່ຂອງເທັກໂນໂລຢີແມ່ນຫຍັງ? (4) ກິດຈະກໍາຫຼັກແມ່ນຫຍັງ / ຈໍາເປັນຕ້ອງມີຫຍັງແດ່ໃນການຈັດຕັ້ງປະຕິບັດກິດຈະກໍາ / ການບໍາລຸງຮັກສາເທັກໂນໂລຢີ? (5) ຜົນປະໂຫຍດ / ຜົນກະທົບການຈັດຕັ້ງປະຕິບັດເທັກໂນໂລຢີແມ່ນຫຍັງ? (6) ສິ່ງທີ່ຜູ້ນໍາໃຊ້ທີ່ດິນມັກ / ບໍ່ມັກ ກ່ຽວກັບເທັກໂນໂລຢີແມ່ນຫຍັງ? ຄໍາອະທິບາຍລາຍລະອຽດຄວນມີຄວາມຍາວ 1,500-1,800 ຕົວອັກສອນ; ສູງສຸດ 2,000 ຕົວອັກສອນ.*

.........................................................................................................................................................................

.........................................................................................................................................................................

.........................................................................................................................................................................

.........................................................................................................................................................................

